ພຣະຣາຊອານາຈັກລາວ

ກະຊວງສຶກສາທິການ ສິລປາກອນ ກິລາ ແລະ ຍຸວະຊົນ



# ພື້ນ ພຣະບາງ

ວຽງຈັນ - ຫໍສມຸດແຫ່ງຊາດ - ໑໙໕໙

# ພື້ນ ພຣະບາງ

ນະໂມຕັດສະ ໆ ສິສວັດສະດີ ອັນນີ້ ຈັກກ່າວຕຳນານ ນິທານອັນຕັ້ງອັດ ແກ້ວ ແຕ່ປະຖົມທົ່ວທີ ທີ່ນັ້ນ . ໃນເມື່ອພຍາຟ້າງຸ່ມ ຕົວແຂ້ວອອກ ແຕ່ ໃນທ້ອງແມ່ ມີນີ້ ເຫັນນັ້ນ ເສນາອາມາດຣາຊມຸນຕຣີ ທັງຫຼາຍວ່າເປັນ ຄົນເຂັດ ຄົນຂວາງ ວ່າດັ່ງນັ້ນແລ້ວ ເອົາໄປໃສ່ແພໄຫຼເສັຽ ໄປຮອດ-ທ່າ ມະຫາປາສະມັນເຈົ້າ ພຣະອົງຈຶ່ງຖາມເຂົາທັງຫຼາຍ ອັນໄປດອນ ນັ້ນ ຮູ້ເຫດການທັ້ງມວນແຈ້ງແລ້ວ ພຣະມະຫາເຖຣາເຈົ້າ ຈຶ່ງເອົາເຂົາ ທັງມວນ ເມືອຢູ່ດອນທີ່ນັ້ນ . ເຖິງນານໄປ ພຍາອິນຖະປັດມະຄອນຫຼວງ ຮູ້ຂ່າວວ່າ ພຣະໄດ້ລູກເຈົ້າຊຽງດົງ ຊຽງທອງ ວ່າດັ່ງນັ້ນ ພຍານະຄອນ ຈຶ່ງໃຫ້ມາຂໍເອົານຳ ພຣະມະຫາປາສະມັນເຈົ້າ ເມືອລ້ຽງໄວ້ເປັນລູກ-ເມື່ອທ້າວໃຫຍ່ມາ ໄດ້ ໑໖ ປີ ກໍເອົາລູກສາວແຫ່ງຕົນ ຜູ້ຊື່ວ່າ ນາງ ແກ້ວລອດຟ້ານັ້ນ ໃຫ້ເປັນເມັຽ . ແຕ່ນັ້ນໄປພາຍໜ້າ ພຍາອິນຖະປັດ ມະຄອນຫຼວງເຈົ້າ ຈຶ່ງຍົກເອົາຣິພົນ ໃຫ້ມາສເວີຍຣາຊສົມບັດ ໃນຊຽງ ດົງ ຊຽງທອງ ກັບທັງນາງແກ້ວລອດຟ້າ ມາເປັນມະເຫສີ ຊື່ວ່າ ນາງ ເທພາຕະນະວິຊິຕະນະທິທິປະຕິ ຣາຊເທວີສີອັນທະປັດ ຣາຊບຸດຕຣີນັ້ນ-ເອົາບ້ານເມືອງທັງມວນໄດ້ແລ້ວ ມາສເວີຍຣາຊສົມບັດ ທີ່ຊຽງດົງຊຽງ ທອງ ທີ່ນັ້ນ . ຍາມນັ້ນ ສາສນາໃນເມືອງລ້ານຊ້າງ ກໍລິ້ຊາປາກົດໄປ ຮຸ່ງເຮືອງຫຼາຍ ທຸກແຫ່ງຫົນ ພຍາກັບນາງແກ້ວລອດຟ້າ ຈຶ່ງໃຫ້ໄປຂໍ-ເອົາສາສນາ ດອນພຸ່ຕົນ ທີ່ນະຄອນຫຼວງພູມ ເປັນຕົ້ນວ່າ ພຣະບາງເຈົ້າ

ກັບມະຫາປາສະມັນເຈົ້າ ຜູ້ລ້ຽງດິນໄທຍມານັ້ນ . ເມື່ອນັ້ນ ພຍາອິນ
ຖະປັດ ນະຄອນຫຼວງ ຈຶ່ງໃຫ້ພຣະມະຫາປາສະມັນ ທັງສອງພີ່ນ້ອງ-
ອັນນີ້ ຫາກແມ່ນເຊື້ອຊາດ ອິນຖະປັດນະຄອນຫຼວງ ມະຫາພະລະກາງ
ເຈົ້າ ຕົນພີ່ ກັບທັງພຣະມະຫາ ເທພະລະກາງເຈົ້າ ຕົນທັງມະຫາ
ນິມປັນຍາເຈົ້າ ທັງສາມຕົນນີ້ ຫາກເປັນເຊື້ອຊາດ ເມື່ອລະກາງທີ່
ພູ້ມມາ ກັບທັງພຣະບາງເຈົ້າ ແຕ່ລະກາງທີ່ຜູ້ນ ພຣະມະຫາເຖຣະເຈົ້າ
ທັງ ໕ ຕົນນີ້ ຮູ້ທັກ ມີປັນຍານັກ ຮູ້ໄຕຍະພິດົກທັງ ມີ ຈົບເພດພາຍ-
ນອກ ເປັນຕົ້ນວ່າ ທຸຣາຊາຕາທັງມວນ ກັບທັງພິກຂຸເຖົ້າ ມາດອນ
໕ ຕົນ ຈົວເນນ ໔ ຕົນ ມີພຣະມະປາສະມັນເຈົ້າ . ພຣະມະຫາເທ
ພະລະກາງເຈົ້າ ເປັນປະທານ ທັ້ນແລ ຄົນພາຍນອກ ອັນເປັນຍາຕິພີ່
ນ້ອງ ພຣະ ທັງ ໕ ມາດອນ ແຕ່ເມືອງນະຄອນຫຼວງຜູ້ນ ນ້າຍສາຣະ
ມະຄອນຊຸມນຶ່ງ ນາຍຊຽງເພົາຊຸມນຶ່ງ ອາຈານຍານະນ້ອຍຊຸມນຶ່ງອາ
ຈານ ທັມມະຈຸງວາຊຸມນຶ່ງ ອາຈານ ສຸ່ເມທາຊຸມນຶ່ງ ນາຍສຸເພຊຸມ-
ນຶ່ງ ນາຍຣາຫຸນຊຸມນຶ່ງ ນາຍໂພທາຊຸມນຶ່ງ ເຂົ້າທັງຫຼາຍຝູ່ງນີ້ ໕
ຮ້ອຍຄົວ ຫາກເປັນຍາດ ພຣະທັງ ໕ ຕົນ ພຍາມະຄອນຫຼວງເຈົ້າໃຫ້
ມາດອນ ຄົນອັນ ພຍານະຄອນຫຼວງ ໃຫ້ມາດອນກັບນາງແກ້ວລອດ
ຟ້ານັ້ນ ຄົວ່າ ນໍ່ຣະສິງຊຸມນຶ່ງ ນໍ່ຣະສານຊຸມນຶ່ງ ນໍ່ຣະມະຣາຍຊຸມ
ນຶ່ງ ນໍ່ຣະເດດຊຸມນຶ່ງ ເຂົາເຈົ້າທັງສີ່ຄົນນີ້ ຮູ້ຈັກຫຼັກຈົບເພດ ສາຕະ
ສິນ ມົນດົນ ຊ່າງຄ້ວັດ ຊ່າງລາຍ ຊ່າງແຕ້ມ ຊ່າງຂຽນ ຊ່າງຫຼໍ່ພຸທຮູບ

ເຈົ້າອົງລ້ານ ອົງແສນ ຈົບເພດທັງມວນ ມີຊຸນພົ້ນອົງ ເຂົ້າເຈົ້າມາ
ດອນ ມີຄົນພົ້ນນຶ່ງ ຊຸນນີ້ຫາກກັບແມ່ນົມ ນາງແກ້ວລອດຟ້າທັງມວນອົນ
ມາດອນນໍຣະຜຶງ ນໍຣະສານ ນໍຣະຣາຍ ນໍຣະເດດ ທັງແມ່ນົມ ນາງ
ແກ້ວລອດຟ້າ ອັນນີ້ເປັນຄົນຫຼວງ ອັນພຍານະຄອນ ໃຫ້ມາໂລມນາງ-
ແກ້ວລອດຟ້າ ພຍານະຄອນຫຼວງເຈົ້າ ໃຫ້ເອົາພຣະຂາງເຈົ້າ ກັບຄົນ
ທັງຫຼາຍ ອອກມາໄຕຍະພິດົກທັງສາມ ກັບທັງຄົນທັງມວນມາພ້ອມພຣະ
ມະຫາສະມັນຕະເຈົ້າ ທັງພ້ອມພຣະມະຫາເທພະລະກາງເຖົ້າ ຄັນວ່າ
ພຣະເຈົ້າພົ້ນອົງ ມາຮອດວຽງຈັນ ຢູ່ຫັ້ນ ກ ອັນ ກໍເອົາພຣະບາງກັບ
ທັງຄົນອອກມາທາງບົກ ຮອດວຽງຈັນຄໍ່າຫັ້ນ ແລ້ວພຣະບາງເຈົ້າກໍບໍ່-
ໄດ້ມາ ເຫດວ່າ ຍົກບໍ່ສິ່ງໃດກໍບໍ່ໄດ້ ຈິ່ງຖອດສາກວ່າ ພຣະບາງເຈົ້າ
ຢູ່ຫັ້ນກ່ອນ ກໍຈິ່ງໄຫ້ວພຣະບາດເຈົ້າ . ເມື່ອນັ້ນ ພຣະມະຫາປາສະ
ມັນເຈົ້າ ກໍເອົາພູ່ຊູນຂຶ້ນມາທາງບົກ ຄັນວ່າຮອດພູ່ມຶ່ງເມືອງຫັ້ນ ພຍາ
ຟ້າ ກັບນາງແກ້ວລອດຟ້າ ກໍໄປລັບໄປໂຈມເອົາພຣະເຈົ້າພົ້ນອົງ ມາ
ຕັ້ງຢູ່ຫັ້ນຶ່ງ ຊື່ວ່າ ນາເຂົ້າຈ້າວຫັ້ນແລ. ຈິ່ງເອົາຕໍານານ ແຕ່ເມືອງ-
ອິນຖະປັດນະຄອນຫຼວງ ມາອ່ານໃຫ້ຄົນທັງຫຼາຍຟັງວ່າ ເມືອງຊາວ-
ລ້ານຊ້າງນີ້ ແຕ່ເຈົ້າຣະສີມາຂອດຫຼັກສີມາໄວ້ເບື້ອງເພື່ອ ເອົາພູ່ຊ້າງ
ນັ້ນເປັນນິມິດ ກໍ່ຕາວັນອອກ ເອົາພູ່ຊອງເປັນນິມິດ ທໍາກາງເມືອງ
ເອົາພູເຂົ້າກ້າເປັນນິມິດ ກໍ່ຫັກຂິນ ເອົາພູ່ຊ້າງເປັນນິມິດ ຈິ່ງໄດ້ຊື່-
ວ່າ ເມືອງລ້ານຊ້າງ ອັນຊື່ວ່າ ເມືອງລາວນີ້ ຄົນທັງຫຼາຍອັນນາ-

ເປັນເຈົ້າເມືອງແຕ່ກ່ອນນັ້ນ ອອກໃນພາກນ້ຳເຕົ້າປູງ ມາເປັນທ້າວ
ເປັນພຍາ ອັນເຂົາວ່າທ້າວຂູນລົ້ນ ຈິ່ງໄດ້ຊື່ວ່າ ລາວ ເມື່ອນັ້ນພາ
ອັນວ່າ ລາວນັ້ນ ບາຊືອະຖະ ແປວ່າ ພາກນ້ຳເຕົ້າປູງ ຫຼືອ ເສັງ
ພົ້ນ ຫາກເປັນວ່າລາວ ອັນວ່າ ຄົນທັງຫຼາຍ ອັນເກີດໃນພາກນ້ຳ-
ເຕົ້າປູງນັ້ນ ດ້ວຍອະຖະວ່າ ທະຣະຖັງລະວະຕິຕິ ລາກຸໂຍ ວັນນິ
ຖະໂຣໂລ ອັນວ່າ ພາກເຄືອໄມ້ອັນໃດ ລະວະຕິລຸນາຕິ ກໍຕັ້ງເສັງ
ທະຣະຕັ້ງຍັງອັນຣອນ ອິຕິຕສມາ ຕັງວັນລິຖະລັງ ອັນວ່າ ພາກເຄືອ
ໄມ້ອັນນັ້ນ ລາວຸ ມານະຊື່ວ່າ ກັດຕຸຣຸປະກັດຕຸສາດ ໄດ້ພາກນ້ຳເຕົ້າ
ປູງ ລາວຸ ຍັງຊາຕິຕິ ລາວຸ ໂອໂຍ ສັດຕະນິກາໂຍ ອັນວ່າ ຜູ້ສັດ-
ຕົວໃດ ຈາຍະຕິກໍເກີດ ລາວຸ ຍັງໃນນ້ຳເຕົ້າປູງ ອິຕິຕສັມາ ໂສ
ສັນນິຕິກາໂຍ ອັນວ່າ ສັດຕົວນັ້ນ ລາພຸໂຊນານະ ຊື່ວ່າ ໄດ້ຜູ້ຄົນ
ອັນເກີດຢູ່ໃນນ້ຳເຕົ້າປູງນັ້ນ ອັນນີ້ຊື່ວ່າ ເມືອງຊວາ ນີ້ເປັນເຫດ-
ຊາດເມືອງ ອັນໄດ້ຊື່ວ່າ ສຸວັນນະພູມີ ເພື່ອວ່າພື້ນແຜ່ນດິນເຂດແດນ
ເມືອງອັນນັ້ນ ມີຄຳມີເງິນ ມີແກ້ວມີເຫຼັກ ມີທອງມີກົ່ວ ມີຊີນມີນ້ຳປາ
ມາກພ້າ ຈິ່ງໄດ້ຊື່ວ່າ ເມືອງຊວາ ດວຍອະຖະວ່າຊາຍະຕິ, ເອຕາຣະ
ເຖຕິ ຊື່ວ່າ ສຸວັນນາທິວະຖັງ ອັນວ່າ ວັດຖຸອັນມີຄຳເປັນຕົ້ນ ຊາຕິຍາ
ຕິ ກໍເກີດມີ ເອຕະຣະເຖໃນເມືອງໜີ້ ອິຕິຕສັມາ ຕັງຣະຖັງ ອັນວ່າ
ໜັ້ນ ຊານາມມະຊື່ວ່າ ອະທິຄະຣະສາດໃດ ເມືອງອັນນີ້ ຕຳນານ
ພຣະມະຫາປາສະມັນເຈົ້າ ວ່າດັ່ງນີ້ແລ້ວ ພຣະສັງຄະເຈົ້າທັງຫຼາຍຈ

ຖາມດູ່ວາ ພູມມະຣະທີ່ໃດ ພູນາງກາງລີທີ່ໃດ ກົກທ່ອນທີ່ໃດ ຊຽງງາມ
ທີ່ໃດ ວ່າດັ່ງນັ້ນ ແຕ່ນັ້ນ ທ່າວພຍາພູ ອັນຮູ້ສືບສອງມາ ເຂົາເລົ່າກໍບອກ
ອັນນຶ່ງ ພໍຊຽງແພງ ພໍເສນາເຂົາຄຳ ພໍຊຽງແກ້ວ ທັງພໍຫຼວງ ແມ່ນ້ຳຫ່ຽງ
ເຂົາທັງຫຼາຍຜູ້ງນີ້ ອັນເຂົາໄດ້ຈື່ໄດ້ຈຳ ແຜ່ນດິນດີທັງມວນ ເຂົາກໍ -
ບອກກໍເລົ່າ ແກ່ພຣະສັງຄະເຈົ້າ ນີມະຫາປາສະມັນເຈົ້າ ເປັນສັງຄະ-
ເຖນ ທັງມວນນີ້ ປູ່ຝ່າຍຂອກຟ້າພູ້ນ ພຣະສັງຄະເຈົ້າ ເລົ່າຖາມວ່າ:
ຊຽງເຫຼັກທີ່ໃດ ຊຽງທອງທີ່ໃດ ຊຽງພອກທີ່ໃດ ຜາຕັດແກ່ທີ່ໃດ ຜາ
ຕັ້ງນາຍທີ່ໃດ ສົບນ້ຳດົງ ແລະສົບນ້ຳໂຮບທີ່ໃດ ງ່ອນໂຮບເບື້ອງເພື່ອທີ່-
ໃດ ພຣະສັງຄະເຈົ້າ ຖາມດັ່ງນັ້ນ ພຍາຟ້າຕື່ມວ່າ ທີ່ຊຽງດົງ ຊຽງ-
ທອງນັ້ນ ຜູ້ຂ້າກໍ່ເຫັນບາດນີ້ ຖາມະທີ່ທັງຫຼາຍ ອັນພຣະມະຫາເຖຣະ-
ເຈົ້າ ທາກຖາມຫານັ້ນ ເຂົາພໍທັງຫຼາຍ ກໍບອກເລົ່າໄປຕາມອັນມີ ຊູທີ່ຊູ
ແຫ່ງຕາມຕຳນານ ເອົາມາແຕ່ນະຄອນຫຼວງ ນາອ່ານໃຫ້ ພຍາຟ້າ ກັບ
ທັງມະຫາເສນາຟ້າ ກໍແມ່ນຕຳນານຊູ່ອັນ ພຣະມະຫາປາສະມັນ ຈຶ່ງກ່າວ
ວ່າ ພຣະສັບພັນຍູເຈົ້າ ໂຄຕະມະ ເຣົາມາໄວ້ປາທະລັກຂະນະ ທີ່ງອນ
ສົບຣົບ ເບິ່ງເພື່ອນທົ້ນ ພຣະອໍຣະຫັນຕາເຈົ້າ ທັງ ໔ ຕົນ ຍັງໄວ້ຮອຍ
ຕີນ ໔ ອັນ ທີ່ຫົວພູເຂົາກາທີ່ນັ້ນ , ແຕ່ນີ້ ເປັນຕຳນານບ້ານເມືອງທັງ
ມວນ ກ່ອນວ່າ ເຣົາກໍເອົາຕຳນານ ແຕ່ນະຄອນຫຼວງພູ້ນມາອ່ານ ກໍ-
ທ່າກແມ່ນຊູ່ອັນ.

ບັດນີ້ມະຫາຣາດເຈົ້າ ຈັກໃຫ້ໂອກາດອະນຸຍາດ ແກ່ເຣົາສົ່ງ-

ໃດ ນັ້ນຈາ ພຍາຟ້າຈຶ່ງກ່າວວ່າ ຂົງເຂດດົງລ້ານຊ້າງທັງມວນ ທີ່ໃດ
ກໍດີ ເປັນທີ່ຕັ້ງສາສນາ ໃຫ້ເຈົ້າກູຕັ້ງສາສນາ ໃນແຜ່ນດິນເມືອງລ້ານ
ຊ້າງນີ້ ກໍ້ຂາເທີ້ນ ອັນນຶ່ງ ໄມ້ຈິງໄມ້ປ່ອງທັງມວນ ທີ່ໃດກໍດີ ເປັນທີ່-
ຄວນໃຫ້ເຈົ້າກູ ເອົາເທົ່າອັນເທີ້ນ ເທົ່າເອັ້ນໄວ້ ແຕ່ສວນອຸທິຍານທັງ
ມວນນັ້ນ ແລະໄມ້ນຶ່ງບ້ານນຶ່ງເມືອງ ທີ່ໃດກໍດີ ຢ່າໄດ້ເອົາລໍາກ່ວານັ້ນ
ໃຫ້ເຈົ້າກູເອົາເທີ້ນ ອັນນຶ່ງ ຄົນຜູ້ໃດກໍດີ ອາຖະຫງາ ຜູ້ຂ້າກໍດີ ຜິດ
ຣາຊເທວີກໍດີ ຜິດເສນາອາມາດກໍດີ ຜິດຣາຊເທວີກໍດີ ຄວນຈັກຂ້າ
ນັ້ນ ເຂົາສອງມາເກີນເຂດແກ້ວທັງສາມ ໃນຂົງເຂດ ເຈົ້າກູຜູ້ຂ້າຂໍ-
ອະພັຍຊີວິດ ເຂົາທັງມວນກໍ້ຂ້ານັ້ນ ເມື່ອນັ້ນ ພຣະມະຫາປາສະມັນເຈົ້າ
ຈຶ່ງເອົາເຈົ້າຂຸນມູນ ນາຍທັງຫຼາຍ ເປັນຕົ້ນວ່າ ນໍຣະສິງ ນໍຣະສານ-
ນໍຣະມະຣາຍ ນໍຣະເດດ ຊຸມນີ້ຍາຕິພຣະເປັນເຈົ້າທັງສິ້ນນັ້ນ ມາຕັ້ງ-
ມາຕັ້ງທີ່ງອົນສິບໂຮບກໍ້ເພື່ອ ທີ່ຕ່ຳນັ້ນບອກວ່າ ພຣະລັກຂະນະພຣະ
ໂຄຕະມະເຈົ້າເຮົາທັ້ນ ຜູ້ງໃດເປັນຄົນໂອນນາງແກ້ວລອດຟ້ານັ້ນພຣະ
ເປັນເຈົ້າ ກໍນອບໃຫ້ເມືອຢູ່ກັບ ດ້ວຍນາງທັງມວນນັ້ນ ເມື່ອພຣະມະ
ຫາປາສະມັນຕະວະນະ ວ່າເຈົ້າໄປຕັ້ງງອນສິບໂຮບນັ້ນ ເດືອນສອງ
ຂຶ້ນ ສາມ ຄ່ຳ ວັນເຈັດ ສັກຣາດ ໗໔໕ ພຣະເຈົ້າພີ່ນ້ອງ ຢູ່ທັ້ນທິກ
ວັນ ແລ້ວຈຶ່ງເອົາລູກມະຫາໂພທິສັດເຈົ້າ ເຊື້ອລະກາງທີ່ນັ້ນ ປູກໄວ້
ໃນທີ່ອົນຈັດຕັ້ງ ມະຫາເຈດີວິຫານ ທັ້ນກ່ອນ ປູກມະຫາໂພທິນັ້ນເດືອນ
໔ ຂຶ້ນເກົ້າ ຄ່ຳ ວັນ ໖ ເມື່ອນັ້ນ ວັນປູກມະຫາໂພທິເຈົ້ານັ້ນພຍາ

ຟ້າ ກັບທັງຣາຊເທວີ ທັງເສນາອາມາດ ຣາຊມູນຕຣີເສດຖີ ແລະພໍ່ຄ້າ
ແລະຊາວເມືອງທັງມວນ ກໍ່ຢູ່ສັກກະຣະບູຊາ ໗ ວັນ ໗ ຄືນ ແຕ່ນັ້ນ
ມາ ເຖິງເດືອນຫົກ ຂຶ້ນ ໗ ຄ່ຳ ວັນ ນຶ່ງ ສັກຣາດ ໗໔໖ ຈຶ່ງຈັກກໍ່ພຣະ
ມະຫາເຈດີທີ່ໄກ ປູກໄມ້ມະຫາໂພດ ພຣະມະຫາປາສະມັນເຈົ້າ ກໍເອົາ
ທາດດູກ ຂມີເບື້ອງຂວາ ພຣະພຸທເຈົ້າ ກັບທັງແກ້ວ ມະນີໂຊດ ອິນ-
ພຍາມະຄອນຫຼວງເຈົ້າ ໃຫ້ແກ່ພຍາຟ້ານັ້ນ ມາຖະບັນນະໄວ້ ກັບທາດ
ດູກຂມີ ພຣະສັບພັນຍູເຈົ້າ ຢູ່ນານໄດ້ສອງປີຖ້ວນ ສາມວັນ ຈຶ່ງສ້າງ-
ວັດແກ້ວ ປີໃດແລ້ວປີນັ້ນ ນາງແກ້ວລອດຟ້າ ຈຶ່ງເອົາແກ້ວມໍຣະກົດປູກ
ລູກນຶ່ງ ອັນມາກັບຄົນນັ້ນ ອະຖະບັນນະໄວ້ ອົກພຣະພຸທເຈົ້າອົງຫຼວງ
ຈຶ່ງໃຫ້ໄລມະເປັນທານ ອຸປະການແກ່ແກ້ວທັງສາມ ໃນທີ່ນັ້ນມາກົພຍາ-
ຈຶ່ງໃຫ້ຂ້ອຍ ກັບຈັງຫັນຊາວຄົນ ທັງໃຫ້ດິນບ້ານທີ່ເຂົາຢູ່ນັ້ນ ເລົ່າໃຫ້-
ຂ້ອຍ ກັບຄ້ອງກອງ ໕ ຄົວ ຂ້ອຍ ແຕ່ງກວາດແຜ້ວ ທັງລັກສາເຂົ້າບູ
ຊາ ແລະເຜິ້ງທຽນ ອັນເປັນເຂົ້າບູຊາ ພຣະພຸທເຈົ້ານັ້ນ ໕ ຄົວ ທັງ
ໃຫ້ແມ່ນົມຕົນ ອັນມາພ້ອມ ພຣະມະຫາປາສະມັນເຈົ້າ ທັງຜູ້ທັງຊູມ-
ອັນເປັນຂ້ອຍຄົນ ແຫ່ງຕົນ ອັນມາຮອດທີ່ຕົນ ຢູ່ໃນຊຽງທອງ ເຂົ້າຢູ່
ທີ່ໃດກໍດີ ແວ່ຢູ່ທີ່ເມືອງແກ້ວໜຶ່ງ ຊື່ວ່າ ໂຄບໄພ ທີ່ແດນເມືອງໝັ້ນ-
ເຈົ້າໝື່ນແກ່ ຈຶ່ງໄດ້ດິນທີ່ໂຄບໄພນັ້ນ ແກ່ແມ່ນົມທ່ານ ກວ້າງພັນວາລວງ
ຍາວ ສອງພັນວາ ໃຫ້ແກ່ແມ່ນົມ ສ້າງໄຮ່ກະທຳນາກິນ ແຕ່ນັ້ນໝື່ນ-
ແກ່ ຈຶ່ງໃຫ້ມາໄຫວ້ ພຍາຟ້າກັບນາງແກ້ວລອດຟ້າ ພຍາຈຶ່ງວ່າ ເຈົ້າ-

ເຈົ້າແຜ່ນເກົາ ໄດ້ໃຫ້ດິນເປັນບ້ານເປັນນາ ແກ່ແນ່ນິມເຮົາ ດັ່ງນັ້ນກໍຊອບ
ກໍຄວນແທ້ແລ້ວ ເຮົາກໍໄດ້ໃຫ້ທານແນ່ນິມເຮົາ ກັບທັງບ້ານທັງດິນທີ່ເຂົາ
ຢູ່ນັ້ນ ກັບທັງວັດແກ້ວທັງມວນ ຈຶ່ງໄດ້ຊື່ວ່າບ້ານໄພ່ແນ່ນິມ ກັບທັງວັດ
ແກ້ວ ຕັ້ງແຮກແຕ່ນັ້ນມາ ບ້ານເມືອງກວ້າງຂວາງດີໜັກ ສາສນາພຣະ
ພຸທເຈົ້າຮຸ່ງເຮືອງໄປດີນັກ ແຕ່ນັ້ນ ຜູ້ໃດມາເປັນເຈົ້າແຜ່ນດິນ ກໍໄດ້ໃຫ້
ທານບ້ານທານດິນ ກັບທັງວັດແກ້ວທັງໃຫ້ອາຈານ ສີທິພຣະພອນແກ່ພຣະ
ມະຫາສາມີເຈົ້າສັງດຽວ ແຕ່ນັ້ນ ວັດແກ້ວມາໄດ້ ໑໗ ປີ ພຍາສາມ-
ແສນໄທ ໄຕຍະພູວະນາຖາ ອັນເປັນລູກພຍາຟ້າ ສເວີຍຣາດໄດ້ປີນຶ່ງ
ຈຶ່ງສ້າງວັດມະໂນຣົມ ທັງຫຼໍ່ພຣະທອງ ເຈົ້າອົງຍັງບັດດຽວນີ້ ໃນວັດ-
ມະເນຣະຖະທັ້ນ ພຣະເຈົ້າອົງນັ້ນ ຄັນລະນາມນໍ້າໜັກ ເຂົາຕອງທີ່ນສີ-
ລາໄວ້ວ່າ ໄດ້ເກົ້າລ້ານເຈັດແສນ ດັ່ງນັ້ນ ພຍາສາມແສນໄທເຈົ້າ
ສເວີຍຣາດ ຈຶ່ງມາສ້າງວັດອຸໂປສົດ ເບື້ອງໜ້າວັດແກ້ວທັ້ນ ວັດໃນ
ເມືອງຊວານັ້ນ ມີ ມີ ຫຼັງນີ້ກ່ອນ ເມື່ອພຍາສາມແສນໄທ ອະນິດຈະກັມ
ແລ້ວ ເຂົາຈຶ່ງໄປເຜົາ ທີ່ສວນແຖມທັ້ນ ນາງເທວີກັບມູນມີທັງຫຼາຍ-
ເປັນຕົ້ນວ່າ ແສນລູກຈຶ່ງກໍພຣະເຈດີຫຼັງນຶ່ງ ທັງສ້າງວັດຫຼັງນຶ່ງ ຈຶ່ງໄດ້
ຊື່ວ່າ ວັດສວນແຖມທັ້ນ ແຕ່ນັ້ນສືບມາຫຼາຍທ້າວ ພຍາມະຫາກະສັດນັ້ນ
ແລ້ວ ຈຶ່ງມາເຖິງ ພຍາໄຊຍະຈັກກະພັດຕິແຜ່ນແຜ້ວ ສເວີຍຣາດໄດ້-
໗ ປີ ຈຶ່ງມາສ້າງວັດກົງແກ້ວ ໃຫ້ເປັນອັນໃຫຍ່ອັນຫຼວງ ເປັນເງິນ -
ເປັນຄຳທັງມວນ ມຸງເປັນຫຼັບສະແກ້ວ ທໍ່ທັງຫຼັງວັດນັ້ນ ພຍາໄຊຍະ

ກະຕິພັດແຜ່ນແຜ້ວ ສ້າງທັງທໍໄຕຍະປິດົກ ທີ່ກາງໝອງພ້າວັດແກ້ວທັ້ນ ເອົາທັງພັງສີທັມມະພຣະເຈົ້າ ປິກະຕະ ທັງ ນີ້ ເອົາມາແຕ່ເມືອງມະຄອນຫຼວງມາໄວ້ທັ້ນ ຈຶ່ງມາເຖຣາພິເສກ ພຣະມະຫາເທພະລະກາງ-ເຈົ້າ ໃຫ້ເປັນພຣະມະຫາສາມີສີລະວິສຸທິ ອຸດຕະມະຈາຣິຍາມະວິເສ-ສະວິໄຊຍະໄຕຍານ ປິຕະກະຄະຣະປະວະຣະເທພະລະກາງເຈົ້າ ໃຫ້ເປັນເຈົ້າວັດແກ້ວ ພຍາໄຊຍະຈັກກະຕິແຜ່ນແຜ້ວ ເຈົ້າຈຶ່ງຕັ້ງປະນິທານະຄໍາ ປາຖນາເຕີມ ອັນມັກອັນພຶ່ງໃຈແຫ່ງຕົນຊູ່ອັນ ຈຶ່ງມາມີລູກຊາຍ ໕ ຄົນ ຄືວ່າ ພຣະເຈົ້າຊຽງລໍ ໑ ພຣະເຈົ້າແກ້ນຄໍາ ໑ ພຣະເຈົ້າ-ວິຊຸນນະຣາຊາ ໑ ພຣະທາວເທພາ ໑ ພຣະຫຼ້າແສນໄຕ ໑ ແລ້ວເຈົ້າມີລູກຍິງນັ້ນ ຄືວ່າ ນາງມູງນາງຮູງ ໑ ນາງເກັດ ໑ ນາງຄໍາ ໑ - ນາງແກ່ນ ໑ ນີ້ເປັນຍານາງທໍຂວັນ ນາງສີໄວຍະກາ ນາງໃຫຍ່ມາໄດ້ ໑໔ ປີ ແລ້ວອອກພາກສູກຕາຍເສັຽ ເອົາມາເຜົາໃນວັດມະໂນທັ້ນຈຶ່ງມາສ້າງ ວິຫານຫຼັງນຶ່ງ ໃສ່ຊື່ວ່າ ວັດຊຽງກາງທັ້ນ ຈຶ່ງໃຫ້ບ້ານເມືອງອັນນັ້ນ ຢູ່ໃກ້ເມືອງສຸດ ຈຶ່ງໃຫ້ມະຫາ ເທພະລະກາງນ້ອຍ ເຈົ້າເຖຣາພິເສກ ໃຫ້ມະຫາສັງຄະເສນາ ສາສນະພິຣົມ ອຸດຕະມະສາມີ ສີລະວິເສສະເທພະລະກາງເຈົ້າ ໃຫ້ເປັນເຈົ້າວັດຊຽງກາງທັ້ນ ຈຶ່ງໃຫ້ທ່ານເສດຖີ ໑໐ ຄົນທັງໝູ່ຊູມລູກຫຼານທ່ານທັງມວນ ເມືອຢູ່ຄ້ຳຄູ້ງວັດ-ຊຽງກາງທັ້ນ ພຍາໄຊຍະຈັກກະພັດຕິແຜ່ນແຜ້ວເຈົ້າ ແຕ່ງບ້ານແປງເມືອງ ຂອບໂລກຂອບທັມດີນັກ ເສນາມຸນຕີ ໄພ່ທັງມວນຊົມຍານມາກ

ໜ້າ ຈຶ່ງໃຫ້ມາຕາ ດູຍັງຣີພົນທັງຫຼາຍ ນອນແຕ່ຊຽງຄານມາເພື່ອ ເທົ້າ
ຮອດສິບທ່າ ແຕ່ລາວທັງນອນ ໄດ້ຫົກແສນ ຂາໄດ້ສອງແສນ ແຕ່ຊຽງ
ຄານ ໄປເທົ່າຊຽງສາ ແລະປາມຂ້າມດ່ານທັງນອນ ທັງເມືອງໄດ້ແກ່
ຄົນຫ້າແສນຫົກໝື່ນ ແຕ່ນໍ້າຮູ່ງໄປເທົ່າເຂດເມືອງນະຄອນທັງນອນໄດ້ຄົນ
ສອງແສນສີ່ໝື່ນ ຊ້າງມ້າທັງນອນ ກໍທາກມີກັບເຈົ້າຊູນທຸກຄົນ ຍັງມີຊ້າງ-
ເຜືອກຕົວນຶ່ງ ເກີດໃນຂົງເຂດເມືອງບ້ານ ຊາວບ້ານມາເລົ່າແກ່ເຈົ້າ
ແຜ່ນດິນ ຈຶ່ງໃຫ້ໝື່ນທ້າວແກ່ນ ລູກໝື່ນຊໍ້າຄໍ່າຮອນມາເອົາ ກໍໄດ້ເປັນຊ້າງ
ຣາຊອານາດ ຊຽງດົງຊຽງທອງທັ້ນ ໄດ້ຊັກໄນຍະຖອຍຄໍາ ແຕ່ຫຼັງຕໍ່
ມານ ອັນກ່າວມາດັ່ງນີ້ ເພື່ອໃຫ້ທ້າວພຍາທັງຫຼາຍ ໄດ້ສ້າງແປງວັດ
ແກ້ວ ໃຫ້ຮູ່ງເຮືອງໄປ ດັ່ງເມື່ອກ່ອນນັ້ນ ເຫດວ່າ ທີ່ນັ້ນເປັນສີບ້ານສີ
ເມືອງລ້ານຊ້າງ ຊຽງດົງຊຽງທອງດີຫຼີ ເລີຍສັງກາດ ໙໒໔ ເດືອນ
໗ ຂຶ້ນ ໔ ຄໍ່າ ວັນ ໕ ແສນຖຽງອານາດໃຫ້ທານດິນ ແຕ່ປູ່ແຕ່ພໍ່ຕົນກັບ
ວັດແກ້ວ ວັນອັນພວກພຣະພຸທຮູບ ເຂົ້າວັດແກ້ວນັ້ນ ໄດ້ຫຼັ່ງນໍ້າພາຍ-
ທານ ຊ້ອງໜ້າພຣະສັງຄະເຈົ້າທັງຫຼາຍ ສົມເດັດພຣະສັງຄະຣາຊຄູເຈົ້າ
ໂຮງຄໍາ ສົມເດັດພຣະສັງຄະຣາດເຈົ້າກູຫຼວງ ສົມເດັດພຣະສັງຄະ-
ຣາດເຈົ້າ ອຸໂປສົດຫຼວງ ສົມເດັດພຣະສັງຄະຣາດເຈົ້າ ວິຊູນຫຼວງ ມະ
ຫາເທວະຄູເຈົ້າ ເປັນປະທານພາຍນອກ ນິພຍາໂລກແລ. ສົ່ງເມືອງ
ທັງມວນ ແສນນັນທະອາເປັນປະທານ ອັນເປັນຖ້ກຄາຍ ສ້າງວັດແກ້ວ
ເທື່ອ ມີແສນກະຂາງ ໑ ແສນລູນ ໑ ໄດ້ແຈ້ງ ປາງສົມເດັດຣາຊມຸນຕີ

ມຸນຕີບຸຣີສີສຸຣະພີ ຊົ່ວເຈົ້າເປັນເຈົ້າວັດສົມເດັດ ສັງຄະຣາດເຈົ້າສຸທາ
ອາດ ເປັນນະວະກັມຕັດໄມ້ວັດ ສເນີເຈົ້າສອນແຖມ ໃຫ້ທານດິນຜາ-
ຂາວ ກໍອັນດຽວນັ້ນ ອັນນີ້ ປາງພະອໍຣະປິດຕາທິຣາຊເຈົ້າ ສເວີຍຣາຊ
ແລ້ວ ອັນນີ້ ອາງພຣະບາງເຈົ້າເລີຍ ມະນະຖຸຊີມະຈະຣະປະຣະ ພຸທ
ບວນບາດ ຈັກກ່າວນິທານ ພຣະບຸຣົມມະນາດເຈົ້າ ຕົນຊື່ວ່າ ຕະໂນ-
ນົມໃນຈຳເຣີນສຸກຂະ ສາມປະການຢ່າຄາດແຄ້ວ ຣອດວຽງແກ້ວ ຄື:
ອະຣະຫັນຕະເຈົ້ານັ້ນ . ດູລາເຈົ້ານັກປາດທັງຫຼາຍ ຕັ້ງແຕ່ພຣະພຸທ
ເຈົ້າ ສະເດັດເຂົ້າສູ່ນິຣະພານ ຄື ປະຖະໂມກຂະມະຫານະຄອນ ນິ
ຣະພານໄປແລ້ວ ໄດ ໔ພັຊ ວັດສາຍັງມີອໍຣະຫັນຕາ ຕົນນຶ່ງ ຊື່ວ່າທຸ
ຣະມະຄະເຖນ ຢູ່ໃນລັງກາທີບພູ້ນ ກໍຣ່ຳເພິງເຖິງຄຸນພຣະພຸທສາສນາ
ເພື່ອຈັກໃຫ້ເປັນຣາວະຣະພົ້ມຄົງ ໄປຕາບຕໍ່ເທົ້າ ຫ້າພັນວັດສາ ເພື່ອ-
ຈັກໃຫ້ເປັນ ຫິຕະປໂຍດແກ່ຄົນ ແລະເທພດາທັງຫຼາຍ ກໍຈຶ່ງແປ່ງ-
ພຣະພຸທເຈົ້າອົງນີ້ ອັນມີສະຖານອາການດັ່ງ ເມື່ອພຣະພຸທເຈົ້າຍັງ
ທົວຣະມານໄປທ້າມ ຍັງຍາດທັງຫຼາຍ ຄືວ່າ ຊາວເມືອງກະບິນລະວັຖ
ຖຸນະຄອນນັ້ນ. ຊາວເມືອງໂກຊີຍະນະຄອນ ອັນຕັ້ງຣິພົນສັກກຸຣະໂຍ
ທານາຣົບກັນແທ້ ຝັ້ງນ້ຳໂຣຫິນີດ້ວຍເຫດ ອັນຊີງກັນເອົານ້ຳນານັ້ນ -
ຄັນມະຫາເຖນເຈົ້າແປງແລ້ວ ເມື່ອຈັກຫຼຸ້ມຄົນແລະເທວະດາທັງຫຼາຍ
ຕ່າງຄົນຕ່າງນຳເອົາມາຍັງເງິນ,ຄຳແລະທອງອັນເປັນຂອງເຫ່ງຕົນ-
ມາກັພກ ຕ່າງຄົນຕ່າງຂໍ່ວ່າເອົາຂອງຕູ່ຂາໃສ່ດ້ວຍແດ່ ວ່າດັ່ງນັ້ນ ມະ

ທາເຖຣະເຈົ້າ ຈຶ່ງຕັດພອນເອົາຍັງວັດຖຸ ແຫ່ງຄົນແລະເທວະດາທັງຫຼາຍ ຄົນໃຫຍ່ແລະນ້ອຍ ຄືວ່າ ເອົາທອງສ່ວນນຶ່ງ ເອົາຄຳສ່ວນນຶ່ງ ມາໃສ່-ເຂົ້າກັນ ໃນເບົ້າລູກດຽວ ຂ້ຽວເປັນນ້ຳດອຍກັນ ແລ້ວຫຼໍ່ໃຫ້ເປັນຮູບພຣະເຈົ້າອົງດີ ເຫດດັ່ງນັ້ນ ຄົນທັງຫຼາຍ ຈຶ່ງເອົາປະວັດນິມິດ ອັນຄົນແລະເທວະດາທັງຫຼາຍ ມາຂໍ ໃຫ້ເອົາຂອງຕົນໃສ່ ປາງແຕ່ນັ້ນ ລວດກົດໝາຍ ຊື່ ພຸທຮູບເຈົ້າອົງນີ້ວ່າ ພຣະບາງ ເພື່ອອັນແລ ໃນລະຍະນຶ່ງ ກິຍາເອົາ-ວັດຖຸແລ້ອມ ແລະທອງນັ້ນ ຊື່ວ່າ ພຣະບາງ ກໍຫາກເປັນໂອຫານ ແຕ່-ຊາວລະກາງທີບ ພຸ້ນມາແລ ຄັນຫຼໍ່ແລ້ວ ໃຫ້ຂັດສີດີບໍຣະສຸດ ຍັງພຸທຮູບ-ເຈົ້ານັ້ນ ກໍຕັ້ງໄວ້ ເພື່ອອາສນ້ຳ ອັນດີແລ້ວ ກໍແຕ່ງເຄື່ອງສັກະຣະບູຊາ ກະທຳພຸທ້າອພິເສກນັ້ນ ຄົນທັງຫຼາຍ ມີພຍາລະກາງທີບ ເປັນປະທານ, ເທວະດາທັງຫຼາຍ ມີພຍາອິນເປັນເຄົ້າ ຊາວທັງຫຼາຍ ມີຈູງວານະຄະເຖນ່ເຈົ້າ ເປັນປະທານ ກະທຳສັກະຣະບູຊາມາກ ເຖິງ ໗ ວັນ ໗ ຄືນ ເມື່ອກະທຳມຸດທາ ພິເສກນັ້ນ ຈູງວານະຄະເຖຣະເຈົ້າ ກໍອາຣາທນາ ສາຣີຣະກະທາດ ພຣະສັບພັນຍູ ປະມານ ໕ ລູກ ໃສ່ໃນພຣະອູບແກ້ວ - ແລ້ວຕັ້ງໄວ້ເພື່ອໄຕຄຳ ກໍໃຫ້ຄົນທັງຫຼາຍ ນຳມາໄວ້ທີ່ຊອງພາ ພຸທຮູບເຈົ້າ ແລ້ວຈຶ່ງມີຄຳອະທິຖານວ່າ ພຸທຮູບອົງນີ້ຍັງຈັກຕັ້ງຢູ່ ໃຫ້ເປັນຫິຕະປະໂຍດ ແກ່ຄົນ ແລະເທວະດາທັງຫຼາຍ ໄປຕາບຕໍ່ເທົ້າ ໕ ພັນວັດສາ ແທ້ ດັ່ງນັ້ນ ຂໍໃຫ້ພຣະສາຣີຣະກະທາດເຈົ້າທັງ ໕ ລູກນີ້ ເຂົ້າຢູ່ໃນຕົນພຸທຮູບອົງນີ້ເທີ້ນ ຄັນວ່າມະຫາເຖຣະເຈົ້າ ອະທິຖານດັ່ງນີ້ແລ້ວ ທາດ

ລູກໜຶ່ງ ກໍສະເດັດເຂົ້າໄປໃນໜ້າຜາກ ລູກໜຶ່ງກໍສະເດັດເຂົ້າໄປໃນຄາງ ລູກໜຶ່ງກໍສະເດັດເຂົ້າໄປໃນຫົວອົກ ລູກໜຶ່ງກໍສະເດັດເຂົ້າໄປໃນມືກ້ຳ-ຂວາ ລູກໜຶ່ງກໍສະເດັດເຂົ້າມືກ້ຳຊ້າຍ ແລ້ວກໍກະທຳຣິດທິປະຕິຫານເປັນອັສຈັນ ແກ່ຄົນແລະເທວະດາທັງຫຼາຍ ປາງນັ້ນດູ່ແທ້ ຕັ້ງແຣກແຕ່ກາລາບັດນັ້ນມາ ພຸທຮູບເຈົ້າອົງນີ້ ຕັ້ງຢູ່ເປັນທີ່ສັກກະຣະບູຊາໄຫ້ແລ້ວ ດັ່ງຄຳນັກຄຳປາຖນາ ແຫ່ງຄົນແລະເທວະດາທັງຫຼາຍ ໃນລັງກາທີບພຸ້ນ ນານປະ-ມານອະຕີຕະສາສນາ ໄດ້ພັນປາຍ ສອງພັນວັດສາກໍມີແທ້ຈິງ ເຈັຽຣະ-ການ ນານແຕ່ນັ້ນມາ ເຖິງພຸທຣະສັງກາດໄດ້ ໘໑໗ ຍານນັ້ນ ຍັງມີພຍາຕົນໜຶ່ງ ຊື່ວ່າ ສຸບິນະຣາດ ກໍສເວີຍສິສົມບັດ ໃນລັງກາທີບພຸ້ນ ເສົ້າຍັງມີພຍາຕົນໜຶ່ງ ຊື່ວ່າ ສີຣິຈຸນທະສເວີຍສິສົມບັດ ໃນເມືອງອິນທະປັດນະຄອນຫຼວງ ໃນຊຸມພູທີບ ເຮົາພີ້ ພຍາທັງແພງຕໍ້ກັນກີໝາ ເມື່ອນັ້ນ ພຍາສີຣິ-ຈຸນທະ ກໍຮູ້ຂ່າວວ່າ ພຣະບາງມີສັກສິດນັກ ຍ່ອມໄຫ້ແລ້ວ ຍັງຄຳນັກຄຳປາຖນາ ແຫ່ງຄົນ ແລະເທວະດາທັງຫຼາຍ ເຫຼົ່ານັ້ນ ແລ້ວກໍຈຶ່ງໄຫ້ຣາຊ-ທູຕາ ໄປຂໍເອົາ ດອນພຍາສຸບິນນະຣາດ ສະຫາຍຕົນ ເມື່ອນັ້ນ ພຍາລັງກາ ກໍໄຫ້ສົ່ງພຣະບາງ ອອກຈາກລັງກາທີບພຸ້ນ ມາດ້ວຍສະເພົາໃນຊຸມພູທີບ ກໍມາຮອດມາເຖິງ ເມືອງອິນທະປັດນະຄອນຫຼວງ ໄຫ້ເປັນທີ່ສັກກະຣະບູຊາແລ້ວດັ່ງຄຳນັກຄຳປາຖນາ ແຫ່ງຄົນແລະເທວະດາທັງຫຼາຍໃນຊຸມພູທີບເຮົານີ້ເດ ແຕ່ນັ້ນມາແລ້ວ ປຸນະນິທານີຖິຕັງ...........

ຍັງອັບປາຣະນິທານ ນັກປາດເພິ່ງຮູ້ສັນນີ້ ເລົ່າໂສດຈຸນ ສັງກາດ

ຜັກຊ ປີ ຮ້ອຍສີ່ພັນປີ ມີກຸມມານຜູ້ນຶ່ງ ເກີດມາເປັນລູກຊາຍຂຸນພີ່ຟ້າ
ອັນວົງສາບໍຣິມະບຸດຕານັດຕາ ແຫ່ງຂຸນບູຣົມຣາຊາທິຣາດ ຕົນສເວີຍສິ
ສົມບັດ ໃນເມືອງຊວາ ອັນເປັນອານະຣະສັດຕະທູດ ໄທວ່າເມືອງລ້ານ
ຊ້າງ ຣາຊກຸມມານຕົນນັ້ນ ອັນຍາດທັງຫຼາຍພາຍຊື່ວ່າ ທ້າວຟ້າງູ່ມສ່ອນ
ວ່າທ້າວຟ້າງູ່ມນີ້ ເມື່ອໄດ້ເປັນພຍາແທນວົງສາຕົນຢູ່ດັ່ງນັ້ນ ເສນາອາ-
ມາດທັງຫຼາຍ ກໍປຶກສາພິເສກຣາຊມານມະກອນວ່າ ພຍາຟ້າຫຼ້າທໍຣະນີສ
ັດຕະມາຄະມາທຸດ ດ້ວຍແທ້ພຍາຟ້າຫຼ້າຕົນນີ້ ກໍບໍ່ຕິຖານຄຸຍເຄີຍພັກ-
ກັບດ້ວຍ ພຍາແກກະຣາດ ຕົນສເວີຍສົມບັດຕິ ໃນອິນທະປັດມະຄອນ
ຫຼວງ ເຫດວ່າ ພຍາມະຄອນຫຼວງ ໃຫ້ຍັງຣາຊທິດາ ແກ່ພຍາຟ້ານັ້ນ
ຍາມນັ້ນ ພຍາກໍຂໍຣາທນາ ເອົາພຣະບາງເຈົ້າ ໄວ້ໄຫວ້ນົບຄົບບູຊາ-
ນັ້ນ ພຍາມະຄອນຫຼວງ ກໍອະນຸຍາດ ແກ່ພຍາຟ້າ ກໍຣາທນາພຣະ-
ບາງເຈົ້າ ກັບທັງພຣະມະຫາ ເຖຣະເຈົ້າ ດອນຕົນນຶ່ງ ຊື່ວ່າ ມະຫາ
ປາສະມັນ ກັບທັງເຈົ້າພີກຊຸ ໔ ຕົນ ເນນ ນີ ຕົນ ພ້າຂາວດາວບົດ
ນັກປາດຣາຊບັນດິດ ກັບທັງຄະທັດ ຢູ່ເພື່ອສືບທ້ວຍໂຮບທັ້ນ ແລ້ວກໍ
ຈຶ່ງປູກໄມ້ ສີມະຫາໂພທິ ອັນເອົາມາກັບຕົນນັ້ນ ກໍຢູ່ເປັນເຄົ້າເຈົ້າ
ສາສນາ ໃນເມືອງລ້ານຊ້າງປາງນັ້ນ ທີ່ນັ້ນ ຄົນທັງຫຼາຍລວດກົດຊື່ວ່າ
ວັດແກ້ວ ຕາມມະນະບັນຍັດຕິ ແຫ່ງມະຫາເຖຣາເຈົ້າ ຕົນສ້າງແປງ-
ນັ້ນ ທຳນອຍແຕ່ນັ້ນມາ ຍັງມີໃນວັນນຶ່ງ ຊ້າງພຍາວຽງ ກໍສັບມັ້ນບໍ່ປ່ອຍ
ໄປ ແລ້ວກໍໄປມ້າງໄປແຫງວັດ ທີ່ພຣະບາງເຈົ້າຢູ່ເສັ້ງ ແລ້ວກໍເຂົ້າໄປ

ຈັດໄມ້ແທງ ແທງພຣະເຈົ້າດົ່ງນັ້ນ ພຣະບາງເຈົ້າ ກິ່ງຕົກແໜ່ນແຂນ
ພຣະເຈົ້າກ້ຳຈ້າຍນັ້ນ ລວດຂຶດແຕບ ເຂົ້າມາຂວານອ້ຍນຶ່ງ ປາງນັ້ນ
ແລ້ວ ສ່ວນດົ່ງຈ້າງຕົວນັ້ນ ມັນຈ້ຳເລົາອອກໄປ ກໍເຂົ້າໄປໃນປ່າພູມ
ຍາມນັ້ນ ຍັງມີຈ້າງປ່າຕົວນຶ່ງ ເຂົາກໍພົບກັນ ແລ້ວເຂົາກໍເລົາຈົນກັນ
ຈ້າງປ່າຕົວນັ້ນ ກໍແພ້ຈ້າງບ້ານ ກໍເຈຕົກລົງເຫວໜຶ່ງ ລວດຕາຍໄປ
ໃນເຫວໜັ້ນ ເປັນສະນິດຖົກັນ ແຫ່ງຈ້າງຕົວນັ້ນ. ຍາມນັ້ນຄົນທັງຫຼາຍ
ຢູ່ໃນເມືອງລ້ານຈ້າງ ກໍບັງເກີດອັສຈັນ ວຶດແຕ່ສົມພານພຣະບາງເຈົ້າ
ນັ້ນມາກັໜາກໍມີແລ ພາຍລູມແຕ່ນັ້ນມາ ພຍາຟ້າກະທຳສຸຈຣິດ ຜິດຣິດ-
ບ້ານຄອງເມືອງດົ່ງນັ້ນ ເສນາອາມາດ ກັບຈາວບ້ານຈາວເມືອງ ທັງ
ຫຼາຍ ພ້ອມກັນແລ້ວ ກໍຂັບພຍາຟ້າ ໜີຈາກພາກເມືອງລ້ານຈ້າງໄປ ກໍ
ມີ ເມື່ອນັ້ນ ພຍາຄຳຕັນທີ່ເມືອງກາງຂວານັ້ນພູນ ໃນປີກາເພົ້າ ສັງ-
ກາດ ຕົກແໜ່ນແຂນ ພຣະເຈົ້າກ້ຳຈ້າຍນັ້ນລວດຂຶດ. ສັງກາດໄດ້ ກຸມ໕
ຕົວນັ້ນ ເຂົາເອົາລູກຈາຍພຍາຟ້າຜູ້ນຶ່ງ ຊື່ວ່າທ້າວອຸ່ນເຮືອນ ອົນມາໄດ້
໑໗ ເຂົ້າ ຕົນໃຫ້ເປັນພຍາແທນພໍ່ຕົນ ແລ້ວກໍອຸດສາຣາຈພິເສກນາມະ
ກອນ ຊື່ວ່າ ພຍາສາມແສນໄທໄຕພູວະນາດ ວິປັດຕິສີສົດຕະນາຄະນາ
ທຸດ ຢູ່ສເວີຍສີສັມປັດຕິ ອັນປະກອບຈອບທົມມາກົໜາ ນານປະມານວ່າ
ໄດ້ ໔໓ ວັດສາ ຕາບຕໍ່ເທົ້າ ອາຍຸແຕ່ຈາດບາໄດ້ ໖໐ ທັດ ກໍເຖິງ-
ອະນິດຖາ ໄປຕາມກັນແຫ່ງທ່ານນັ້ນເອງ ບັດນັ້ນ ທ້າວລ້ານຄຳແດງ-
ພຍາສາມແສນໄທ ກໍໄດ້ສເວີຍແທນພໍ່ຕົນ ຢູ່ນານປະມານໄດ້ ໑໗ ປີ

ກໍຈຸດຕີໄປຕາມກັນທ່ານນັ້ນ ບັດນັ້ນ ທ້າວພິມມະທັດ ລູກພຍາລ້ານຄຳ
ແດງ ກໍສເວີຍຣາດແທນພໍ່ຕົນ ໄດ້ສິບເດືອນກໍຕາຍໄປ ເລົາຖັດນັ້ນພຍາ
ປາກຢໍາ ລູກພຍາສາມແສນໄທ ເປັນພຍາແທນເລົາໄດ້ ໕ ເດືອນກໍ-
ຕາຍເສັຽ ຖັດນັ້ນ ພຍາພື່ນໃສ ລູກພຍາສາມແສນໄທ ເປັນພຍາແທນ
ເລົາໄດ້ ໗ ເດືອນກໍຕາຍເສັຽ ຖັດນັ້ນ ພຍາໄຄ ລູກຟ້າຄຶມ ຫຼານສາມ
ແສນໄທ ເປັນພຍາແທນ ເລົາໄດ້ ໓ ປີຕາຍເສັຽ ຖັດນັ້ນ ທ້າວຊຽງ-
ສາລູກນາງນ້ອຍອ່ອນ ເມັຽສາມແສນໄທ ກໍໄດ້ເປັນພຍາແທນເລົາໄດ້
໓ ປີກໍຕາຍເສັຽ ຖັດນັ້ນ ທ້າວຍູຄອນ ລູກລ້ານຄຳແດງ ຫຼານສາມແສນ
ໄທກໍໄດ້ເປັນພຍາແທນ ເລົາໄດ້ແປດເດືອນ ກໍຕາຍເສັຽ ຖັດນັ້ນ ທ້າວ
ຄຳເກີດ ເປັນລູກລ້ຽງມະຫາເທວີ ເປັນພຍາແທນເລົາໄດ້ ໔ ປີກໍຕາຍ
ເສັຽ ແຕ່ນັ້ນມາເຖິງທ້າວລືໄຊ ລູກພຍາສາມແສນໄທ ທີ່ເກີດໃນປີຣບ-
ມິດ (ມະເມ) ສັງກາດໄດ້ ໗໗໗ ຕົນນັ້ນ ເຈົ້າໃຫຍ່ມາໄດ້ ໒໓ ປີ ກໍ
ໄດ້ເປັນພຍາ ສືບວົງສາພໍ່ຕົນ ເລົາເມື່ອນັ້ນ ເສນາອາມາດ ກໍອຸພິເສກ
ນາມວ່າ ພຍາໄຊຍະຈັກກະພັດແຜ່ນແຜ້ວ ສເວີຍຣາຊສົມບັດຕິ ຢູ່ໃນຊຽງ
ທອງ ລ້ານຊ້າງ ເຈັຽຣະການ ນານພໍກແລ້ວ ເຈົ້າກໍຈຶ່ງຣຳເພິງເຖິງ
ຄຸນ ພຣະບາງເຈົ້າມາກະພາ ກໍຈຶ່ງໃຫ້ໄປຣາທນາ ເອົາແຕ່ເມືອງຊຽງ
ຄຳ ພຸ້ນມາ ເພື່ອຈັກໃຫ້ເປັນທີ່ໄຫວ້ນົບ ຄົບບູຊາ ແກ່ຄົນແລະເທວະ
ດາທັງຫຼາຍ ໃນເມືອງຫຼວງຣາຊທານີ ດັ່ງນັ້ນ ຄົນທັງຫຼາຍ ກໍໄປ-
ຣາທນາ ພຣະບາງເຈົ້າໃສ່ໃນເຮືອ ແລ້ວຂຶ້ນມາແກ້ງຈັນຫັ້ນ ເຮືອພຣະ

ຫີນ ເຮືອພຣະບາງເຈົ້າ ກໍລອດລົ້ມຈົມເສັງ ຄົນທັງຫຼາຍຄືນມາເລົ່າ
ແກ່ພະຍາ ໄຊຍະຈັກກະພັດຕິວ່າ ເຮືອພຣະບາງລົ້ມເສັງແລ້ວ ແມ່ນພຣະ
ບາງເຈົ້າ ກໍຈົມເສັງ ເມື່ອນັ້ນ ພະຍາກໍມີຄຳຄຶງໃຈວ່າ ໂອນໍ ອົນນີ້
ບຸນຍະສົມພານເຮົາຫາກນ້ອຍ ກໍບໍ່ເຄີນໄດ້ໄຫວ້ນົບ ເຄົາຣົບບູຊາຮັກ
ສາ ພຣະບາງເຈົ້າ ແທ້ດຫຼືມາ . ອັນນຶ່ງ ຣອຍວ່າຈັກເປັນອຸບາດອົນ
ຕາຍ ແກ່ບ້ານເມືອງເຮົາ ພາຍໜ້າອັນຊະລີ ພະຍາຮ່ຳເພິງດັ່ງນີ້ແລ້ວ-
ລອດບໍ່ໃຫ້ເປັນໂທດ ເປັນໂພຍແກ່ຜູ້ໃດຜູ້ນຶ່ງເລີຍ ເມື່ອນັ້ນ ເທວະດາ
ກໍເອົາພຣະບາງ ອອກຈາກນ້ຳທີ່ນັ້ນ ແລ້ວກໍເອົາໄປທອດໄວ້ ທີ່ວັດ-
ແທ່ນ ຄືເກົ່າ ພຣະບາງເຈົ້າ ຢູ່ໃນວຽງຄຳພູ້ນດັ່ງເກົ່າ ໃນຣາຕີຄືນ
ອັນນັ້ນ ເທວະດາມາສັງຫອນ ແກ່ກວນວັດໃຫ້ຝັນວ່າ ພຣະບາງເຈົ້າ
ມາຢືນຢູ່ເທິງຫົວແທ່ງນັ້ນ ກ່າວວ່າ ດູລາທ່ານກວນວັດ ກູພັດຄືນມາຢູ່
ດອນນຶ່ງນີ້ແລ້ວ ຍາມນັ້ນກວນວັດສະດຸ້ງຕື່ນ ນັ້ນຄຶງໃຈວ່າ ມີຄຳວ່າ
ອົນຕາຍອັນໃດ ເກີດມີແກ່ພຣະບາງເຈົ້າອັນຊະລີ ຮູ້ວ່າພຣະບາງເຈົ້າ
ໜີຄືນມາດັ່ງນັ້ນ ກູຝັນນີ້ອັນຊະລີ ນັ້ນຄຶງດັ່ງນີ້ ຄັນຮຸ່ງເຊົ້າ ນັ້ນກໍຣີບ
ຊຳຣະເນື້ອຕົນນັ້ນດີແລ້ວ ກໍຈຶ່ງໄຫວ້ພຣະເຈົ້າໃນພູນ ນັ້ນກໍຈຶ່ງເຫັນພຣະ
ບາງເຈົ້າໃສຍາດ ຢູ່ເໜືອແທ່ນທີ່ນັ້ນ ນັ້ນຈຶ່ງຣີບໄປໄຫວ້ ມະຫາເຖຣະ
ເຈົ້າໃນກຸຕິ ແລ້ວເລົ່າເນື້ອບອກແກ່ພະຍາ ຕົນເປັນເຈົ້ານັ້ນ ເມື່ອນັ້ນຄົນ
ທັງຫຼາຍ ຈຶ່ງມາກະທຳ ສັກກະຣະບູຊາມາກໜັກ ແລ້ວກໍຈຶ່ງປຸກ ຈຶ່ງຍໍພຣະ
ບາງເຈົ້າຕັ້ງໄວ້ດັ່ງເກົ່າ ແລ້ວກໍບັງເກີດອັສຈັນແກ່ຄົນທັງຫຼາຍຜູ້ຢູ່ໃນ-

ລ້ານຊ້າງຢາງນັ້ນມາກໜ້າ ຈຳພາຍແຕ່ນັ້ນມາໄດ້ ມີ ປີ ເມື່ອຈຸນສັງກາດ
ໄດ້ ໗໔໑ ປີກໍດີ ໄດແກ້ວທ້ອງເມືອງບົວເອົາ ອັນວ່າ ພິນລັກກຸນໂຍທາ-
ອາມາດ ມານ້າງເມືອງລ້ານຊ້າງເສັງ ປາງນັ້ນ ພຍາໄຊຍະຈັກກະພັດຕິ
ກໍໜີຈາກເມືອງຫຼວງ ຣາຊທານີ ໄປຢູ່ຊຽງຄານພູ້ນ ນ່ຽນເສິກແລ້ວ ລອດ
ສະຊີວິດເພ່ງຕົນ ໄປຕາມກັມທ່ານ ໃນເມື່ອປີນັ້ນ ເມື່ອນັ້ນເຈົ້າສຸ້ວັນນະ
ບັ້ນລັງ ໄທ່ວາພຍາແທ່ນຄຳ ຕົນເປັນລູກຈື່ງສົງການ ແລ້ວກໍສ້າງມະຫາ
ວິຫານຫຼ້ວງວາດໄວ້ໃຫ້ທານ ກະທຳບູນໄປຫາ ລອດປາກົດວ່າ ວັດຊຽງ-
ຄານ ຕາບຕໍ່ເທົ້າ ກະລະບັດນີ້ . ເມື່ອນັ້ນ ເສນາອາມາດທັງຫຼາຍ
ກໍອະພິເສກ ເຈົ້າສຸ້ວັນນະບັນລັງ ເປັນພຍາແທນພໍ່ຕົນ ແລ້ວຈື່ງນຳແຕ່
ເມືອງຊຽງຄານພູ້ນ ຂຶ້ນມາຮອດເມືອງຫຼວງ ຣາຊທານີແລ້ວ ກໍສ້າງແປງ
ຊຽງດົງ ຊຽງທອງ ຢູ່ສືບປະເພນີພໍ່ຕົນ ດັ່ງເກົ່າ ເລົ່ານານປະມານ
ວ່າໄດ້ ໗ ປີ ກໍອະນິດຈະກັມ ເຖິງຕົນທ່ານ ພາຍຫຼັງແຕ່ນັ້ນ ທ້າວຫຼ້າ
ແສນໄຕ ລູກພຣະໄຊຍະຈັກກະພັດຕິ ກໍໄດ້ສເວີຍຣາດ , ເປັນພຍາແທນ
ພໍ່ຕົນ ແລ້ວກໍ່ຣູ້ວ່າ ພຣະບາງເຈົ້ານີ້ ສະອາດໃຫ້ແລ້ວ ຍັງຄຳມັກຄຳ
ຢາຖນາ ແຫ່ງຄົນທັງຫຼາຍນັ້ນ ພໍ່ຕົນໃຫ້ໄປຣາທນາມາ ເພື່ອຈັກໃຫ້ອ-
ນົບ ໂຄຣົບບູຊາ ລັກສາ ກໍໄດ້ສເວີຍຣາດແທນພຍາ ແທນພໍ່ຕົນ ແລ້ວ
ທ້າວສີເພຊະຣາດກູມມານ ລູກພຍາ ໄຊຍະຈັກກະພັດ ເກີດມາໄດ້ ໓໔
ປີ ກໍຈື່ງ ໄດ້ສເວີຍຣາດ ເປັນພຍາ ອຸພິເສກຣາດ ພຣະນາມວ່າວິຊຸນ
ລະຣາດທານີ ສີສັດຕະນາຄະນາຫຸດ ປະວຸດຕິ ເຫດວ່າເອົາປະວຸດຕິນີ້

ນິດ ເມື່ອຂະນານມຸດທາພິເສກນັ້ນ ສາຍຟ້າແມ່ເມືອງເຮືອງຮຸ່ງໃນ
ອາກາດທັງມວນ ແຜ່ດິນທາທຸ ກໍພາຍອາກາດຢູ່ຕົ້ນ ປາກົດແກ່ຄົນທັງ
ຫຼາຍ ເມື່ອນັ້ນ ເມື່ອນັ້ນ ພຣະວິຊຸນລະຣາດ ສເວີຍສີສົມປັດຕິ ກໍເລົ່າ
ຣຳເພິງ ຄິດເຖິງສົມພານ ພຣະບາງເຈົ້າວ່າ ກ່ອນວັສຈັນມາກໜັກ ກໍ
ປະສົງໃຈສ້າງ ມະຫາວິຫານຫຼັງນຶ່ງແລ້ວ ດ້ວຍທິພສົມບັດ ສົມອັນພິຈິດ
ດ້ວຍຮູບລາຍດອກທັງມວນ ຄວນວັສຈັນຍິ່ງໜັກ ໃນປີເຕົ່າສັນເດືອນວິສາ
ຂາງອກ ໑໘ ຄ່ຳ ວັນເສົາ ນັກຂັດຕະຣຶກຄິດ ໑໑ ຕົວຈຶ່ງວ່າ ບົວລະພະ
ພລະຄຸນນີ້ ມີຣວາຍພິຍານພາດ ລົ່ນມີເຈົ້າສັງກາດໄດ້ ໙໗໔ ຕົວ ຄົນ
ວ່າສ້າງແລ້ວບໍ່ຣະບວນຄວນ ຈຶ່ງຣາໝາພຣະບາງເຈົ້າ ແຕ່ວັດມະໂນ
ຣົມ ມາປະດິດສະຖານໄວ້ ໃນວິຊຸນລະມະຫາວິຫານ ແລ້ວທ່ານກໍແຕ່ງ
ເຄື່ອງ ສັກກາຣະບູຊາທັງມວນແລ້ວ ດ້ວຍສຸວັນນະຣາຊຜະສັດຕະຣະມະ
ພິຈິດແລ້ວ ອາຣາສົກກະທັງຫຼາຍ ພາຍນອກຊາວຄົນແລ້ວ . ຣາຊສົມ
ມາຄານນະເຂດທັງຫຼາຍ ພາຍນອກ ອັນຈະຕຸປັດໄຈຍະທັງສີ່ ປະການ
ຖວາຍບູຊາພຣະບາງເຈົ້າ ເປັນເຄົ້າ ເປັນປະທານ ໄປຕາບຕໍ່ເທົ້າ-
ເຖິງພຸທສາສນາ ນັ້ນດີຫຼີແທ້ ສ່ວນວ່າວິຊຸນນະຣາດ ສເວີຍສົມປັດຕິນັ້ນ
ປະມານວ່າໄດ້ ໔໐ ວັດສາ ແຕ່ສັງກາດໄດ້ ໙໔໑ ຕົວ ເດືອນ ໗
ຂຶ້ນ ໑໔ ຄ່ຳ ວັນທິດ ພຣະແສນຫຼວງສຸຣິນທາ ວັດສາມີປະສາທະສະ
ທາກໍອາກາດຢາດນ້ຳ ໃຫ້ເພີ່ນຕາງເມືອງ ຊອນກັບລູກບ່າວຂ້ອຍຄົນຜູ້
ຊູມທັງມວນ ປະສາດໃຫ້ເປັນທານ ແກ່ສົມເດັດມະຫາສັງຄະຣາຊາທົ່ນ

ມະຣາໂສເຈົ້າ ຕາບຕໍ່ເທົ່າ ໕໐໐໐ ວັດສາ ໃນເມື່ອສັງກາດໄດ້ ໗໔
ຕົວ ເດືອນ ໑໑ ແຮມ ໔ ຄໍ່າ ວັນພຣະຫັດດຶກ ຊື່ວ່າ ປຸດສາຍະສົມ
ເດັດມະຫາສັງຄະຣາຊາເຈົ້າ ເຫັນອັສຈັນທັມມະພາຍໜ້າ ກໍຈຶ່ງປາສາດ
ທີ່ໃຫ້ເພີ້ນຕາງ ເມືອງຊອນກັບລູກຂຸນ ຂອຍຄົນຜູ້ຊຸມທັງມວນຜູ້ງັ້ນ ໄວ້
ກັບທໍ່ພຣະບາງເຈົ້າ ໃນອາຮາມເມືອງຫຼວງຣາຊະອານຶ່ງ ປະສິດທິ-
ເຫຼັກ ລົງໄວ້ໃນຫຼາບທອງ  ເປັນຜ້າສີຕາບຕໍ່ເທົ່າ ໕໐໐໐ ວັດສາມະ
ຫາສັງຄະຣາຊຳສັງຄະໂລກ ມະຫາສັງຄະຣາຊາທົວຂອງ ມະຫາສັງ
ຄະຣາຊາສາມີ ໄພມະຫາທັມມະເສນາ ພີ້ນຊ້າງເປັນປະທານ ແສນ
ນັມທາ ອາມາດ ແລະພີ້ນແສນເມືອງເລັກ ກວມຊາຍເກົ້າພີ້ນທໍ່ສຸຣິນ
ທະພະສັງຄະເຈົ້າ ຕົນໃດກໍດີ ທ້າວພຍາແສນພີ້ນ ນ້ອຍໃຫຍ່ຜູ້ໃດກໍດີ
ຢ່າໄດ້ມ້າງກອງທານອັນນີ້ເສັງ ບຸຄລະຜູ້ໃດ ທາກຍັງມ້າງກອງທານນີ້
ເສັງ ໃຫ້ຂາດເສັ້ງດັ່ງນັ້ນ ໃຫ້ມັນຜູ້ນັ້ນໄດ້ທົງໃນອຸບາຍ ທັງ ໔ ເປັນ
ດັ່ງເທວະທັດນັ້ນເທີ້ນ ຊາດມາໄດ້ ໕໔ ປີ ກໍມີອະນິດຈະກັມມິດປິກ
ຕິມມິດ ປາກົດແລ້ວ ລວດເມື່ອສເວີຍສຸຄຕິວິມານພຸ້ນ ໃນປີ ກົດສີ ສັງ
ກາດໄດ້ ໒໔໘ ຕົວນັ້ນ ທັດນັ້ນ ພຣະໂພທິສາລະຣາດກຸມມານ ລູກ-
ພຣະຊິຊຸມມະຣາດ ເກີດມາໄດ້ ໑໕ ປີ ເຈົ້າກໍໄດ້ສເວີຍຣາຊສົມບັດຕິ
ເປັນພຍາແທນພໍ່ຕົນນັ້ນ  ປະມານວ່າໄດ້ ໆ ຂວບ ເຂົາເຈົ້າກໍປະກອບ
ດ້ວຍ ຕິກຂະປັນຍາ ກັມມະກັດຕາບະນະ ກໍຣຳເພິງດູຍັງຄູນ ແລະໂທດ
ໃນກັມສອງປະການ ຄືກຸສົນລະກັມ ອະກຸສົລລະກັມອັນກະທຳບັນຍະຜອກຜີ

ພໍ່ພີ່ເນ່ ພີ່ແຖນທັງຫຼາຍ ວ່າເປັນໂທດໜັກແລ້ວເຈົ້າກໍມານຶກໄດ້ໃຫ້ເປັນ
ປະໂຍຊນະ ເປັນຄຸນແກ່ຄົນທັງຫຼາຍ ຈຶ່ງໃຫ້ນ້າງໃຫ້ຣຶດເສັງຍັງມິດສາ
ທິດຖິ ຜີເຮືອນທັງຜີເສື້ອອັນຢູ່ເຮືອນກວນຂຶ້ນແຖນທັງມວນ ກໍຈຶ່ງຕັ້ງມະ
ຫາວິຫານຫຼັງນຶ່ງໃນວຽງຊຽງດົງ ເປັນທີ່ຕັ້ງພຣະພຸທສາສນາ ໃນປີເມືອງ
ໄຄ້ ພຸທສັງກາດໄດ້ ໒໒໕ ຕໍ່ນັ້ນດ້ວຍແຫ່ປາງພຣະໂພທິສາລະຣາດເຈົ້າ
ຈຶ່ງໃຫ້ແບ່ງເສດຕະສັດເງິນ ໙໐໐໐໐໐໐ ບາດເງິນລູກນຶ່ງພ້າຊະນະ-
ຖວາຍແຖນພ້ອມໄປບູຊາພຣະບາງເຈົ້າທັ້ນ ເຈົ້າກໍສເວີຍຣາຊສົມປັດຕິ
ດ້ວຍທົດສະພິທັມມະໂນປະມານວ່າໄດ້ ໔໗ ວັດສາຕາແຕ່ຊາດມາໄດຫາ
ສິບສອງປີ ກໍມີອານິດຈະທັມມະກັ່ນມາເຖິງທ່ານໃນປີເມືອງມິດ ສັງກາດ
ໄດ້ ໘໐໘ ຕໍ່ນັ້ນຖັດນັ້ນພຣະໄຊຍະເສດຖາທິຣາດຕົນເປັນລູກ ພຣະໂພ
ທິສາລະຣາດແຕ່ເກີດມາໄດ້ ໑໔ ປີເຂົາກໍໄດສເວີຍຣາດເປັນພຍາແທ່ນ
ພໍ່ຕົນແລ້ວກໍໃຫ້ແບ່ງກະໂຈມທົວຄຳອອກນຶ່ງ ປະດັບດ້ວຍແກ້ວແຫວນມາກ
ໜັກ ບູຊາພຣະບາງເຈົ້າປະການນຶ່ງເຈົ້າກໍສ້າງຊຽງທອງ ທີ່ເປັນຣາຊ
ມູນທຽມໃຫ້ສ້າງມະຫາວິຫານສະຖານທີ່ຕັ້ງພຣະຣັຕນະໄຕແກ້ວທັງສາມ
ໃນປີກາບໃຈ້ ສັງກາດໄດ້ ໘໔໙ ຕໍ່ນັ້ນແລ້ວກໍພີໄປສ້າງຈັນທະບູຣີຣາຊ
ທານີທັ້ນແລ ເມື່ອນັ້ນພຍາໄຊຍະເສດຖາທິຣາດ ໄປຢູ່ຈັນທະບູຣີກໍເລົາ
ກໍມາຫາເຈດີລູກນຶ່ງພແນປູຣະນະວັດຖຸ ອັນພຍາລີທັມມະກາໂສກະຣາດ
ທາກໃຫ້ແປງແຕກອນນັ້ນ ກໍມານິມິດ ສະປາຣະມີກຸດີ ມີ ທັດ ລອມພຣະ
ມະຫາທາດ ລູກນັ້ນ ແລ້ວກໍ ສລະເຂົາຂອງ ກອງແກ້ວ ຖວາຍ...

ບູຊາພຣະສາຣີຣະກະ ທາດລູກນັ້ນ ໃນທີ່ນັ້ນມາກໝັ ບໍ່ອາດຈັກອ່ານຈັກ ນັບໄດ້ດອກ ສ່ວນວ່າພຍາໄຊຍະເສດຖາທິຣາດ ນັ້ງຢູ່ສເວີຍລີສົມບັດຕົວ່າ ໄດ້ ໘໔ ວັດສາຕາ ແຕ່ຊາດມາໄດ ນີ່ຊູ ກໍລວດເຖີງອະນິດຈະກັມໄປ ຕາມກັ່ມທານ ໃນປີຣວງນິດ ສັງກາດໄດ້ ຜມນໍ ຕົນນັ້ນ ອະປະຣະນິດ ທາ ກໍມີຖືຕັງ... ອີນັງພຸທພິຖະຣູບ ປະກາຍະມານະຊານິຕະພັງ ປາ ທະຕະລະໂຕ ປະຖາຍະຍາວະມະລາ ເກສາປະຣົຍນຕັງ ຈະຕຸວິທະຖີ- ປະມານັງ ຕະໂຕ ເກສາປະຣິຍັນຕັງ ໂຕຍາວະໂນຣີຣັງ ສະຍາສັດຕະ ອະຄຸງລີ ປະມານັງໂທຕີ ອີນັງພຸທພິຖາຄູຣຸກປະມານັງ ຊານິຕະພັງປັນ ຈະຊະຕາທິກັງ ຈະຕຸທັດສະທະທິການີຈັດຕາ ປາສາທະ ໂອກາດໄວ້ກັບ ວິຊຸນລະມະຫາວິຫານ ດັ່ງນີ້ ເມື່ອຈຸນສັງກາດໄດ້ ໓໗໔ ຕົວປີເຕົ່າສົມ- ເດືອນວິສາຂາອອກ ໑໒ ຄ່ຳ ວັນເສົາ ນັກຂັດຕະລືກ ກົດ ໑໑ ຕົວ ນີ້ ຣວາຍຍໍ ຍາມກາດລົ່ມສີເຊົ້າ ພຣະວິຊຸນລະຣາດເຈົ້າ ປະກອບດ້ວຍ- ກຸສລະເຈຕະນາ ລັກສາສາສນາພຣະພຸທເຈົ້າ ຈຶ່ງມາສ້າງວິຊຸນລະມະ- ຫາວິຫານ ສະຖານທີ່ນີ້ ເພື່ອໃຫ້ເປັນຖາວອນໄປ ຕາບຕໍ່ເທົ້າ ໕໐໐໐ ວັດສາ ແລະ ໃຫ້ເປັນທີ່ເພິ່ງ ແກ່ບໍຣິສັດທັງຫຼາຍ ພື່ວ່າຜູ້ໃດພົດອາດຍາ ຄວນຂ້າກໍດີ ຄວນໃສ່ຄາແຂນກໍດີ ໃສ່ຄົ້ພາຄາພັກກໍດີ ຄວນໃສ່ຄອກຂັງ ກັ້ນກໍດີ ຄວນເສັ້ງພີເງິນ ພັນຄໍາຣ້ອຍກໍດີ ພາຍເຂົ້າມາເພິ່ງວິຊຸນລະ ມະຫາວິຫານຫຼວງກຸດີທີ່ນີ້ ມາຕາບາດຍ່ຳໃນເຂດບາດນີ້ງ ຍັງນອກເຂດ ກໍດີ ໃຜຢ່າໄດ້ກະທໍາຕາມໂທດ ອັນນັ້ນທ່ອນ ທີ່ໃຫ້ແຕ່ງເຄື່ອງ -

ສົມມາ ແກ່ພຣະຣັຕນະໄຕເຈົ້າ ແລ້ວເອົາອອກມາຫາວຽກຫາການລາວ
ຄົນເປັນຂ້ອຍກໍໃຫ້ເປັນຂ້ອຍ ລາວຄົນເປັນໄພ່ກໍໃຫ້ເປັນໄພ່ ດັ່ງເກົ່າ-
ເທີ້ມ ອານິສົງພລະຜູ້ງນີ້ ຈົ່ງໃຫ້ໄປຮອດໄປເຖິງ ພໍ່ແມ່ປູ່ຍ່າຕາຍາຍ ຜູ້
ແກ່ ພໍ່ບ້ານແມ່ເມືອງພຸ້ນ ຕາບຕໍ່ເທົ້າເຖິງຕົນກູ ຜູ້ສ້າງວິຫານນີ້ ລູກເຕົ້າ
ຫຼານເຫຼັນ ຜູ້ຈັກສືບ ປະເພນີໄປຕາບຕໍ່ເທົ້າ ໕໐໐໐ ວັດສາ ຕາບໃດ
ກູໄດ້ໄປເຖິງຍັງນິຣະພານ ຍັງທົວຣະທຽວລົງສານນີ້ ຂໍໃຫ້ປາສຈາກກັນ
ເວັນທັງມວນ ເມື່ອໃດ ພຣະເມດໄຕຍະເຈົ້າ ໂພທິສັດລົງມາ ຕັດສັບ-
ພະຍູຕັ້ນຍານ ຂໍໃຫ້ຜູ້ຂ້າໄດ້ເກີດມາຮ່ວມວັນ ພຣະພຸທເຈົ້າອົງນັ້ນ ແລ້ວ
ຂໍໃຫ້ໄດ້ເຖິງອໍຣະຫັນຕະ ມັກຄະຍານປະຕິສະມິດສະທານ ໃນສຳນັກ-
ພຣະເມດໄຕຍະເຈົ້າ ຕົນນັ້ນເທີ້ອວັນເທີ້ນ ຄັນວ່າ ເຈົ້າໂອກາດຢາດ
ນ້ຳພາຍທານດັ່ງນີ້ແລ້ວ ກໍກົດພາຍລາພຣະສົມມາ ຄານະເຂດອາຣາມີ
ກະທັງຫຼາຍ ໄວ້ດັ່ງນີ້ ເຂດວັດ ເອົາແຕ່ສົ້ນມະແຈກຳແພງເບື້ອງຕາວັນ
ອອກ ລົງໄປສົບຫ້ວຍຊ້າງ ຢ້ານຂຶ້ນເມືອດອຍຣິມຄານ ຮອດຜາຍັງທ່າ
ຄວາຍ ແລ້ວຂຶ້ນເມືອຮອດດອນຫຼວງ ຮອດຮ່ອງໝອງ ລົງເມືອ ອຸໂປ
ສົດນ້ອຍຮອດແຈກຳແພງ ທ້າຍວັດ ເບື້ອງຕາວັນຕົກນັ້ນ ໄວ້ເປັນເຂດ
ວິຊຸມລະມະຫາວິຫານ ແຕ່ແຈກຳແພງທ້າຍວັດ ເບື້ອງຕາວັນຕົກກ້ຽວ
ເມືອທາງ ອຸປະໄພຍະ ແລ້ວຂຶ້ນມາຮອດສົບຫ້ວຍຊ້າງ ຢ້ານນັ້ນໄວ້-
ເປັນເຂດ ມະຫາເຈຕິຍະອາຣາມ ກູເອົາຂ້ອຍ ໄວ້ກັບວັດວິຊູນ ໔໐
ຕົນ . ໃຫ້ທານຊ້າງ ພຣະຊຽງທອງ ເປັນຊຽງທອງ ເປັນ....

ພັດວັດ ຮັກສາພຣະອວນກູທັງມວນນີ້ ຢ່າໃຫ້ຫຼາໃຫ້ຄ່າເສັງຈັກອັນເທື່ອມ
ນ້ຳບ້ວຍບານໃວ້ໃຫ້ເປັນນ້ຳອິຊຸມ ໃຫ້ໄທວັດ ເກັບເປັນອຸປະການ ແກ່
ພຣະພຸທເຈົ້າທັງມວນ ໃຫ້ເປັນເຂົ້າກິນ ຕ່ອນພາຕີນພູຊອງ ໄວ້ໃຫ້ເປັນ
ຂ້ອຍ ວັດອິຊຸມ ເຮັດໄຮ່ກິນເມືອງ ຜ້ານອຍເຂົ້າງວດ ໕໐ ຖວດແລະ
໕ ພັ້ນ ເປັນເຂົ້າບູຊາ ພຣະເຈົ້າເມືອງທາກຄານ ເຂົ້າຖວດຮ້ອຍເຄິ່ງ
ນຶ່ງມາ ເປັນເຂົ້າອູປະການບານນວດ ເຂົ້າຖວດ ໕໐ ເຄິ່ງ ເບັ່ງພັ້ນ
໕໐໐໐ ມາເປັນອູປະການ ບ້ານຖິ່ມຄຳແດງ ມີຖວດພາກ ໑໐ ມັດ ບູ
ຊາພຣະ ເຈົ້າຫ້ານບຸນພ້າຂາວສົ່ງບູນ ນັ໐ ເກິ່ງ ສູ່ປີໄວ້ຢູ່ຄຸ່ຍາດ ວັດ
ບ້ານໂພນທອງ ມີຖວດສາດຫຼວງ ມາປູພື້ນວັດອິຊຸມສູ່ປີ ໃຫ້ທານກວາດ
ວັດ ຖືຂ້ອຍວັດໄພ່ວັດມາ ຢູ່ຮັກສາວັດທຸກວັນທຸກຄືນ ສເມີດັ່ງຂ້ອຍເຍ້ງ
ຮັກສາເຍັງເສົາທອງນັ້ນແທດຫຼີ ໃຜຢ່ານ້າງຢ່າຮືດຮອຍນີກູເສັງ ວັດຍັງ
ແຕກຍັງແພງທີ່ໃດ ກໍໃຫ້ຢືດໃຫ້ຢາ ເອົາຫ້າວມາລູມເອົາຊູມມາໃພ້ຜູ້ໃດ
ກໍດີ ຢ່າໄດ້ເອົາຂ້ອຍວັດຜູ້ງນັ້ນໄປທີ່ໃດ ຢ່າເອົາໄປລາກໄນຊື່ ແກ່ໄນຊື່
ຈງງ ຢ່າເອົາໃບແບ່ງສນ່ານພ້ານໃຫ້ຍ ບຸກຄະລະຜູ້ໃດຍັງນ້າງຮາຊ-
ອາດຍາ ສະທາແຫ່ງກູເຢື່ອງນີ້ເສັ່ງ ໃຫ້ມັ້ນພູ້ມັ້ນ ໄປໄພ້ໃນອະບາຍທັງ
ສີ່ ສເວີຍທຸກຂະເວທນາ ເປັນດັ່ງເທວະທັດມັ່ນເທື່ອ ປະການນຶ່ງເມື່ອ
ຈຸນສັງກາດໄດ້ ໘໙໔ ຕົວ ເດືອນ ໑໔ ຂຶ້ນ ໑໕ ຄ່ຳ ວັນ ໑ ຫຼືກົດຕີ
ກາພຣະແທນເຈົ້າ ໃຫ້ທານບ້ານຖິ່ມກາງ ຢູ່ດິນເມືອງເຄີງໄຕ້ ມີພາກ
ຖວດ ມັດນຶ່ງ ເຂົ້າສານ ພັ້ນນຶ່ງ ໄວ້ກັບກາງຄະດີ ພຣະມະຫາສັງ

ຄະຣາຊາເຈົ້າ ວິຊຸນລະມະຫາວິຫານ ຕາບຕໍ່ເທົ້າ ໕໐໐໐ ວັດສາທ້າວ
ມາລູນ ມາໃພ່ ໃພ່ຢ່າໄດ້ຖືກຖອດໄດ້ ຍັງທານວັດຖຸ ເທົ່າກູເທັ້ນ ອັດ
ສະລິສີສວັດດີ ນະມັດສະ ໂດຍພຣະບົວຣະບາດ ໄຕຍະຣັດຕະນາດ-
ແກ້ວ ມີ ປະການ ທັງຍົວຣະພາ ຈາຣິດຜູ້ສລາດແຈງ ສາຕາບູຣານ
ຍັງນິທານ ຕຳນານອັນນີ້ ເຮົາຈັກກ່າວເຖິງ ທ້າວຜູ້ມີບູນ ແມ່ນຊຸມຄວນ
ຕົນອົງອາດ ຍົດຍິ່ງກ້ວາງ ອະນັນຕະ ຊື່ວ່າ ພຍາຈັນທະພົມດີ ທັດສະ
ພິທະຣາຊທັມມະ ເງິນຄຳເກີດມີມາກ ບູນທ້າວພາກ ແຕ່ງແປງໂສດ
ດູລາສັບປູຣິສາທັງຫຼາຍ ເມື່ອສິກາຍະມູນີເຈົ້າ ເຂົ້າສູ່ນິຣະພານ ໄປ
ໄດ້ ເຂດປະມານ ໘໐໐໐ ປີ ສ່ວນວ່າ ພຣະໄທຊາຍຜູ້ນຶ່ງ ຊື່ວ່າຈັນ
ທະການິດ ລ້ຽງຊີວິດດ້ວຍກັນ ອົນຂາຍພູ ຍັງມີອັນນຶ່ງ ທ່ານກໍຫາໝ
ພູ ມາຮອດ ກໍ່ຈຶ່ງມາຈອດແວ່ນອນ ໃນກຸດີມະຫາເຖຣະເຈົ້າ ບັງສະ
ກຸນ ຕົນວິເສດ ອັນຕະເທດຣະໂວ ມາຢູ່ເມືອງຖັນນັ້ນ ຄັນທ່ານຈອດ
ນອນຄືນນຶ່ງ ກໍ່ຫຼົບພັ້ນພີ ນິສະຫາສັນນຮ້ງສຽງ ອອກຕ້ອງກ້ອງເປັນປະ
ດຸດຈະດັ່ງສຽງ ຕູຣິຍົນຕີທົ່ມນັ້ນ ມະຫາເຖຣະເຈົ້າ ຈຶ່ງພິຈາຣະນາດູ
ຕຳນານ ພຣະກໍ່ຮູ້ແຈ້ງ ດ້ວຍປັນຍາແຫ່ງຕົນວ່າ ຜູ້ນັ້ນຫຼ້ງຈັກໄດ້ -
ເປັນທ້າວພຍາຕົນນຶ່ງ ໃນເມືອງຊວາ ປະກົດຕຳນານນິທານອັນເຈົ້າ
ຣັດສີ ທຳນວາຍທວາຍໄວ້ນັ້ນ ບໍ່ຢ່າ ຍາມນັ້ນມະຫາເຖຣະເຈົ້າຈັກປຸກ
ມັນໃຫ້ຕື່ນ ກໍ່ງກອຍຜູ້ມັນໄດ້ທ້າວທັນມັນທັ້ນ ຍາມນັ້ນມັນກໍສະດຸ້ງຕື່ນທັນ
ຜັນນັ້ນກໍມາເລົ່າຄວາມຜັນແຫ່ງມັນວ່າ ຂ້າແກ່ເຈົ້າກູ້ຂານອນຄືນນີ້ຝັນວ່າ

ເຈົ້າຣັດສີຕົນນັ້ນ ມີຣິດທິທະຍານມາແຕ່ອາກາດກາງຫາວ ກໍກົ້ງຍັງກອຍ
ພູທ້າວ ທັບຍັງຕີນພູ້ຊາດີຫຼີແທ້ ຍັງຈັກເປັນເຫດການສິ່ງໃດ ແກ່ພູ້ຊານີ
ຈາ ຍາມນັ້ນ ມະຫາເຖຣະເຈົ້າ ກໍແກ້ຄວາມຝັນອັນນັ້ນ ເຫດຕົນຫາກ
ໄດ້ກະທຳສິ່ງດຽວ ທີ່ກ່າວທຳນາຍທວາຍນ້ຳພັກວ່າດັ່ງນີ້ ຄືລາວອຸປະສົກ
ທ່ານຈັກໄດ້ເປັນທ້າວພຍາ ຕົນປະເສີດໃນເມືອງຊວາ ພາຍໜ້າພູມທຽວ
ແທ້ ບໍ່ສົງສັຍແລນາ ອຸປະສົກຈຶ່ງຂົນຂວາຍຫາເຣືອໄດ້ແລ້ວ ຊວນເອົາ
ພີ່ນ້ອງມິດສະຫາຍ ຂຶ້ນເມືອກະທຳການ ດັ່ງເມືອຄ້າເມືອຂາຍນັ້ນຄັນວ່າ
ອຸປະສົກ ຂຶ້ນເມືອເຖິງເມືອງຊວາ ແຕ່ພາຕັດແກ່ຕົງນາຍເມືອເພື່ອນັ້ນ-
ສົ່ງຕໍ່ອຸປະສົກ ຍັງຈັກຂາຍກ້ອນຄຳອອກມາ ໔ ມື້ ນີ້ ທີ່ ຖ້າແມ່ນດັ່ງນັ້ນ
ກໍດີ ອຸປະສົກ ຢ່າຮີບເອົາໃຫ້ຂີບບອນ ນຳເສັງກອນ ຢ່າເອົາໃຫ້ຮອດ
ດ້ວຍ ອັນນັ້ນຊື່ວ່າ ດອນຊາຍຄວາຍຣາ ຢູ່ຟາກນ້ຳແງສີບຄານທັ້ນ ອຸປະ
ສົກ ຈຶ່ງຕັ້ງທັພຣາຍຄາວຈອດຢູ່ທີ່ນັ້ນເທີ້ນ ເຫດດັ່ງນັ້ນ ກ້ອນຫີນທັງນອນ
ໃນກອນຊາຍຄວາຍຣາ ແລະດອນຊາຍຄວາຍ ຝຸ່ນມີຫຼັກ ເມືອງທົວເມືອງ
ນັ້ນ ກໍຈັກເກີດເປັນຄຳພິດທັງນອນ ຄວນອັສຈັນມາກໜັກ ຈົກຕັ້ງຢູ່ບູຊາ-
ອຸປະສົກຊ່ວັນຊ່ຄືນ ຕາບຕໍ່ເທົ່າ ເຖິງ ໗ ວັນ ໗ ຄືນ ໗ ວັນ ໘ ວັນ
ນັ້ນ ອຸປະສົກຈຶ່ງໃຫ້ຄົນທັງຫຼາຍ ເກັບເອົາຄຳທັງນອນ ມາໄວ້ເປັນ -
ຣາຊສົມບັດຕິ ອຸປະສົກທັງນອນເທີ້ນ ເມື່ອນັ້ນ ຈັນທະພານິດ ໄດ້ຍິນຄຳ
ແທ່ງ ມະຫາເຖຣະເຈົ້າ ທຳນານທວາຍ ໃຫ້ແກ່ຕົນສັນນີ້ ກໍຊົມຊື່ນ ຍິນດີ
ມາກໜັກ ຄັນຮຸ່ງເຊົ້າວັນລູນ ຈັນທະພານິດ ຖືນ...

ໄປຂົນຂວາຍຫາເຮືອ ໄດ້ເຫຼັ້ມນຶ່ງ ແລ້ວກໍຊັກຊວນພີ່ນ້ອງ ສະຫາຍວ່າ
ຈັກເມືອຄາຣອດທີ່ເມືອງຊວາ ທີ່ເຂົາລືຊາວ່າ ເງິນຄຳມີມາກໜັກເມື່ອ
ນັ້ນ ຝູງເຂົາຈັກເປັນບ່າວຖີ້ມ ຍິນດີວ່າ ພວກຂ້ອຍຂໍຈັກເມືອເມືອງ-
ຊວາດອນເຈົ້າດີຫຼີ ເມື່ອນັ້ນ ເຂົາຈິ່ງຂົນຂວາຍສິ່ງຂອງຄ່າ ຂົນໄປເຮືອ
ແລ້ວ ກໍເອົາກັນຂຶ້ນມາ ດ້ອຍລັບດັບອັນຄືນມາກໜາ ຍັງມີອັນນຶ່ງເຂົາ
ຈິ່ງຮອດເມືອງຊຽງຄານ ຄ່ຳແລ້ວ ເຂົາຈິ່ງຈອດທີ່ທ່າວັດຊາຍເຮົາ-
ຫັ້ນ ໃນຄືນນັ້ນ ຈັນທະພານິດເລົ່າຝັນ ກິນອາໂຈມມາກນັກ ຄັນວ່າ
ມັນຕື່ນເຊົ້າແລ້ວ ທ່ານກໍເມືອໄຫວ້ ມະຫາເຖຣະເຈົ້າ ວັດຊາຍເຈົ້າ
ນັ້ນ ເລົ່າຄວາມຝັນອັນນັ້ນ ແກ່ມະຫາເຖຣະເຈົ້າ ມະຫາເຖຣະເຈົ້າ
ຈັກແກ້ ຄວາມຝັນອັນນັ້ນ ຈິ່ງກ່າວວ່າ ກູລາອຸປະສົກ ທ່ານຈົ່ງໄປເກັບ
ເອົາໝາກເຂືອ ທີ່ເປັນປັນຍາວິດຫັ້ນ ມາກິນກັບປາແດກເສັງເໝັ້ນ ຄັນ
ວ່າອຸປະສົກກິນແລ້ວ ຈົ່ງສະເກົ້າດຳຫົວເສັງ ກໍຈັກມີຊັຍໄປພາຍໜ້າກໍ-
ຈັກໄດ້ເຂົ້າສອງສົມບັດມາກໜັກນັ້ນ. ຄັນວ່າມະຫາເຖຣະເຈົ້າແກ້ຄວາມ
ຝັນດັ່ງນີ້ແລ້ວ ຈັນທະພານິດກໍເກົາກະທຳຕາມມະຫາເຖຣະເຈົ້າຫັ້ນເມື່ອ
ນັ້ນ ຈັນທະພານິດກໍຂຶ້ນມາດ້ອຍລຳດັບບ້ານເມືອງ ສຽງວັນແລະຄືນ-
ມາກໜັກແລ້ວ ກໍຈິ່ງມາຮອດພູຕັດແກ້ ຕົ້ວມາຍຂຶ້ນມາຍານນັ້ນແສນຖ້ຈັນ
ທະພານິດ ຈິ່ງຄາບກ້ອນຄຳອັນມາປາກົດແກ່ຄົນທັງຫຼາຍ. ເຈົ້າຈັນທະ
ພານິດກໍປາບບວມນ້ຳເສັງເລົ່າໂຖິຂຶ້ນມາຄາວນຶ່ງ ກໍຄາບຄຳອອກມາ-
ສອງທີສາມທີ ເຈົ້າຈັນທະພານິດກໍຂາຍບວມລົງນ້ຳເສັງ ຝູງບ່າວເຮືອ

ທັງຫຼາຍກໍຕືອກວ່າ ເສັງດາຍເດ ຍາມນັ້ນ ເຈົ້າຈັນທະພານິດຈຶ່ງກ່າວ ວ່າ ເຈົ້າທັງຫຼາຍຢ່າເສັງດາຍເທີ້ນ ເຮົາຫາກຈັກໄດ້ພາຍພາຜູ້ນ-ມາກກວ່ານີ້ ພົ້ນທີ່ແສນທີ່ເຫັດຫຼື ເມື່ອນັ້ນ ບ່າວເຮືອທັງຫຼາຍ ກໍຍິ້ມດີ-ມາກພົກ ເຂົາກໍໃສ່ໃຈສະຂຶ້ນມາ ຈຶ່ງຮອດດອນຊາຍຄວາຍຣາທັ້ນ ກໍເອົາກັນເຊົາຢູ່ ແປງຕູບແປງທັບຮາວຄາວຈອດຢູ່ທັ້ນ ເມື່ອນັ້ນ ຍັງມີ-ຊາຍນາຍບ້ານຜູ້ນຶ່ງ ແບກກ້ອນຫີນລົງ ເພື່ອຈັກຕີເອົາຂອງຄາວ ດັ່ງນັ້ນ ຄົນວ່າ ຈັນທະພານິດຫຼຽວເຫັນ ຈຶ່ງກ່າວວ່າ ດູລານາຍບ້ານ ທ່ານຈັກແບກກ້ອນນັ້ນມາສັງຈາ ຊາຍຜູ້ນັ້ນກ່າວວ່າ ຂອຍແບກມາຍັງກ້ອນຫີນອັນນີ້ ເພື່ອວ່າຈັກຕີເອົາຂອງ ຄາດອນເຈົ້າທັງຫຼາຍດາຍ ເມື່ອນັ້ນຈັນທະພານິດຈຶ່ງກ່າວວ່າ ອັນທ່ານແບກມານັ້ນຕັ້ງແມ່ນກ້ອນຄຳແດງແພງຄ່າມາກພົກເດ ເມື່ອນັ້ນຈຶ່ງປົ່ງລົງຈາກບ່າ ດູກໍເຫັນເປັນກ້ອນຄຳແດງແທ້ນັ້ນຈຶ່ງກ່າວວ່າ ອັນນີ້ຫາກເກີດດ້ວຍບຸນຍະສົມພານເຈົ້າກູດາຍ ຜູ້ຂາ-ຖວາຍໄວ້ບູຊາ ເຈົ້າກູທ້ອນ ເຈົ້າກູ້ຈັກກູ້ມາຜູ້ຂ້າເທົ່າໃດ ຜູ້ຂ້າກໍຈັກລັບທາມນຳເຈົ້າກູ ໃນຂະນະນັ້ນ ຫີນໃນດອນຊາຍຄວາຍຣາແລວ ດອນຊາຍຄວາຍຝູງທັງມວນ ກໍພ້ອງເກີດເປັນຄຳພິດທັງມວນ ຄວນອັສຈັນມາກພົກກໍຕັ້ງຢູ່ບູຊາ ເຈົ້າຈັນທະພານິດ ປະມານ ໗ ວັນ ໗ ຄືນ ໃນເມື່ອວັນ ໗ ວັນ ໘ ນັ້ນ ເຈົ້າຈັນທະພານິດ ຈຶ່ງພິຈາຣະນາ ໃຫ້ຄົນທັງຫຼາຍໄປເກັບຂົນມາກອງໄວ້ ເປັນຣາຊສົມບັດ ແຫ່ງຕົນ ບໍ່ອາດຈັກຄັນ-ລະມານັບໄດ້ .

ຄັມມະນານັບໄດ້. ແລ້ວເຈົ້າກໍແຈກປັນ ໃຫ້ຄົນທັງຫຼາຍ ກໍຍິນດີນາກັນ
ດ້ວຍບຸນຍະສົມພານ ຂອງພຣະອົງ ເຂົາຈຶ່ງຈາກັນວ່າ ບຸກຄະລະຜູ້ມີບຸນ
ຍະສົມພານ ອັນເທັນມາປາງນັ້ນ ປານດັ່ງເຈົ້າຕົນນີ້ ຫາຍາກນັກໃນ-
ໂລກນີ້ແລ້ວ ບັດນີ້ ຄວນເຮົາທັງຫຼາຍ ອຸດສາຣາຊພິເສກ ເຈົ້າຕົນນີ້ໃຫ້
ເປັນທ້າວພຍາ ແກ່ເຮົາທັງຫຼາຍເທີ້ນ ເມື່ອນັ້ນ ເຂົາກໍພ້ອມກັນ ແລ້ວ
ຈຶ່ງເອົາເຈົ້າ ຈັນທະພານິດ ໃຫ້ນັ່ງເພື່ອກອງຄຳ ອັນເຂົານຳນັ້ນແລ້ວ-
ກໍເບີກລາບາສີ ທິດສົງອົງເກດ ປົກສາຣາຊພິເສກ ໃຫ້ເປັນທ້າວພຍາ
ແກ່ຄົນທັງຫຼາຍ ພາຍຊື່ວ່າ ພຍາຈັນທະພານິດ ສະຖິດສຸວັນນະພູມກໍມີ
ຍາມນັ້ນ ເມື່ອນັ້ນ ຄົນທັງຫຼາຍ ຈຶ່ງເອົາກັນມາເຜ້ວຖາງ ປ່າທອງຫຼາງ
ທີ່ສົບຫ້ວຍຄາຍຫັ້ນ ແປງຣາຊມູນທຽນ ປາສາດທີ່ຢູ່ພຍາແລ້ວ ເຂົາຂຸດ
ເສົາໂລງ ເລົ່າຍັງໄດ້ແຜ່ນທອງ ຢູ່ໃນພື້ນແຜ່ນດິນທີ່ນັ້ນມາກັນ ເຫດ
ດັ່ງນັ້ນ ຄົນທັງຫຼາຍ ພາຍຊື່ວ່າ ໂລຫະປະສາດ ຕົ້ນສາງໂອຫານໄວ້ວ່າ
ໂຮງຊຽງທອງ ຕາມນິມິດສອງປະການນັ້ນ ດູລາສັບປູຣິສາ ທັງຫຼາຍ-
ພຍາຈັນທະພານິດ ກໍສົມຣິທິດ້ວຍເຂົ້າຂອງກອງແກ້ວ ນາກັນແລ້ວພຍາ
ຕົນນັ້ນ ກໍຢູ່ສເວີຍສີສົມປັດຕິສົມບັດ ອັນຊອບປະກອບ ດ້ວຍທົດສະຣາຊ
ທັມ ມີທານມະສົມພາວະນາເປັນຕົ້ນ ແລະສັ່ງສອນປະຊານະຣັດທັງ
ຫຼາຍ ໃນເມືອງຊວາ ທີ່ເຈົ້າອັນນັ້ນ ທີ່ນັ້ນຣັສມີສາງແປງ ເສົາອິນຂະ-
ຂີນຂື້ນແລ້ວ ແລະທຳນວຍທວາຍໄວ້ ໃນມະຫານະຄອນ ຣາຊທານີຊຽງ
ດົງຊຽງທອງໂດຍຣີດຄອງອັນຊອບ ປະກອບດ້ວຍທົດສຣາຊທັມ ໑໐ ປະ

ການ ມີທານະສີນພາວະນາເປັນຕົ້ນ ທີ່ແທ້ພາຍພ້ານີ້ ຄົນທັງຫຼາຍຍ່ອມ
ຍໍຕົນເອງໂອດອ້າງ ກະທຳຍົດຍິ່ງກວ້າງ ບູຮານຍ່ອມຮູ້ຈາຣະຈາຕົນຮູ້
ຫຼັກຍິ່ງກວ່ານັກປາດ ບໍ່ປຸນປານຍ່ອມກະທຳກັມ ອນສາທານໃນສາສນາ
ພຸທເຈົ້າ ເຮັດໃຫ້ເສົ້າສເນນເຮັ່ງໄປປາງນັ້ນ ຊາວເຈົ້າອໍຣະຫັນຕາ
ຕົນນຶ່ງ ຊື່ວ່າ ປະສຸງກຸນຣະເຖຣະເຈົ້າ ຕົນນຶ່ງ ຈຶ່ງຣຳເພິງດູເຫດອະ
ນາຄົດ ຈັກເປັນກັມສາໂທດຮ້າຍໃນສາສນາ ກາລະວິປະຣິຕະແທ້ລວດ
ວ່າ ບໍ່ມີຄວນ ມະຫາເຖຣະເຈົ້າ ຈຶ່ງຈາຣະຈາຕໍ່ພຍາວ່າ ດູລາມະຫາ
ຣາດເຣີຍ ພາຍພ້າພູ້ນ ຈັກປາກົດເປັນອະນິຈາ ສັງສານການເມືອງ
ຈັກເປັນກິຕິ ຍັງອະກຸດສລະ ຈັກເກີດມີນາກພັກ ແກ່ຄົນທັງຫຼາຍ ຈັກ
ເປັນກັມລະທົບ ມີກອງເກີດທົ່ວທ້ອງປະຖະພີ ໃນຣາຊທານີກໍຈັກເສົ້າ-
ສູນເສັງ ແນ່ນສາສນາພຣະພຸທເຈົ້າກໍຈັກເປັນຮ້ອຍເສັງ ເມື່ອນັ້ນພຍາ
ໄດ້ຍິນຄຳຄນຶງໃຈວ່າ ກໍຊວນພຣະມະຫາເຖຣະເຈົ້າເອົາພຣະສີຣະກະ
ທາດພຣະພຸທເຊົ້າ ອັນມີວັນນະ ໖ ປະການຄື່ວ່າ ນະທັມຕະສຸວັນນະ
ວັນນາມະ ຊື່ວ່ານາປຸດຕິກາປະພະ ຂຸທະກາກະກຸນລະວັນນາໃສ່ໃນໂສາ
ໂກດແກ້ວ ໃສ່ໃນໂລກໂກດຄຳມະຫາເຖຣະເຈົ້າແລະພຍາ ກໍນຳເອົາ
ໂກດພຣະທາດເຈົ້າໄປຮອດຖ້ຳພູຊອງທັງສອງທົ້ນ ແລ້ວຍັງເສນາອາ-
ມາດທັງຫຼາຍກໍໃຫ້ຂົນໄປຍັງເຄື່ອງສັກກາຣະບູຊາ ແລະຣາຊສົມບັດຕ້ອນ
ເກີດດ້ວຍບຸນຍະສົມທານແຕ່ງພຍານັ້ນນາກພາບໍ່ອາດຈັກຄະນະນາໄດ້ກໍຢູ່
ກະທຳສັກກາຣະບູຊາພຣະທາດເຈົ້ານັ້ນປະມານ ໗ ວັນ ໗ ຄືນແລ້ວກໍຈຶ່ງ

ປະມານໄວ້ ໃນຖ້ຳທີ່ໝັ້ນກໍບໍ່ລົບບັດທັງນອນມາກພັກ ດ້ວຍແສນໂກດໃສ່
ໄວ້ເຕັມໃນຖ້ຳ ແລ້ວກໍໃຫ້ອັດໃຫ້ຕັນໄວ້ດີແລ້ວ ດ້ວຍກ້ອນຫີນອັນໃຫຍ່-
ເພື່ອບໍ່ໃຫ້ເປັນສາທານ ເພື່ອຈັກໃຫ້ຜູ້ບຸນຍະສົມພານ ໄດ້ອະທິຖານເອົາ
ອອກ ມາເລືອກສາສນາພຣະພຸທເຈົ້າ ເປັນດັ່ງພຍາສີທັມມະອະໂສກະ
ຣາດ ອັນຈັກເລືອກຍົກຍໍທັງສາສນາພຣະພຸທເຈົ້ານັ້ນ ກະທຳສັດຈະອະທິ
ຖານ ດ້ວຍບຸນຍະສົມພານແຫ່ງທ່ານ ກໍຈິ່ງໄດ້ພຣະສາຣີຣະກະທາດອັນ-
ພຍາອະຊາຕຸ ຫາກຝັງໄວ້ນັ້ນ ເອົາອອກມາແລ້ວ ກະທຳເຈດີວິຫານ
ໄດ້ປະມານແປດໝື່ນສີ່ພັນຫຼັງ ທົ່ວຊົມພູທີບທັງມວນນັ້ນແລ້ວ ຄັນວ່າພຍາ
ຖະປະນາທາດໄວ້ແລ້ວ ດັ່ງນັ້ນ ກໍຈິ່ງແປງຮູບນິກລົງບິກມປາ ບໍ່ໄດ້-
ມາຈົບເຈົາເຫງົາ ເພື່ອວ່າຈັກໃຫ້ແກ້ເປດ ສາສນາບັນທາ ໑໔ ປະ
ການ ນິມິທານນິກຍາງເປັນຕົ້ນ ຊື່ວ່າ ກິຍຸໂຊກ ເມື່ອຈັກແກ້ເປດສາ-
ສນາບັນທາ ໑໔ ປະການນັ້ນ ເລົ່າໂສກຜີຈັກໂຈດດັ່ງນັ້ນ ເຮົາເພິ່ງ
ໂຖດນິກຍານດູວ່າດັ່ງນັ້ນ ດູລານິກຍາງເຮີຍ ດັ່ງລື ສັງບໍ່ກອກນິກຍາງ
ວ່າ ປາບໍ່ບອນ ບໍ່ບອກດາຍ ປາເຮີຍດັ່ງລືສູ້ສັງບໍ່ບອນ ປາວ່າຫງາໄຊ
ລົກນິກຫງ້າໄຊດັ່ງລື ສັງມາຣົກນັ້ນຈາ ຫງາໄຊວ່າ ຣົກເພື່ອງົວຄວາຍ
ບໍ່ກັດ -໓- ງົວຄວາມເຮີຍ ເທດດັ່ງລືສູ້ສັງບໍ່ກັດຫງານັ້ນຈາ ງົວຄວາຍ
ວ່າ ກູບໍ່ກັດ ເທດເຈົ້າກູຜູ້ໄວ້ບໍ່ປ່ອຍກູມາ -໔- ເຈົ້າງົວເຮີຍເທດໃດ
ບໍ່ໄດ້ປ່ອຍງົວຄວາຍເດ ເຈົ້າງົວວ່າບໍ່ປ່ອຍ ເພື່ອວ່າກູບໍ່ໝົນໄດ້ກິນເຂົ້າ
ແສບທ້ອງ ທ້ອງກູຫິວຫຼາຍ -໕- ທ້ອງເຮີຍ ເທດໃດມຶງເລມາແສບ-

ນັ້ນຈາ ທ່ອງວ່າເພື່ອເຂົ້າບໍ່ສຸກ - ໗ - ເຂົ້າເຮືອ ເຫດໃດນຶ່ງບໍ່ສຸກ
ນັ້ນຈາ ເຂົ້າວ່າບໍ່ສຸກ ເພື່ອວ່າໄຟບໍ່ລຸກດາຍ -໘- ໄຟເຮືອເຫດໃດນຶ່ງ
ບໍ່ລຸກນັ້ນຈາ ກູບໍ່ລຸກເພື່ອວ່າຝົນຊຸ່ມດາຍ -໙- ຝົນເຮືອເຫດໃດນຶ່ງມາ
ຕົກລິນນັ້ນຈາ ຝົນວ່າກູຕົກ ເພາະວ່າກົບຂຽດຮ້ອງຫາກູດາຍ - ໑໐ -
ກົບຂຽດເຮືອ ເຫດໃດສູ່ສ້ອງຮ້ອງຈາ ກົບຂຽດຮ້ອງ ເພື່ອວ່າງູໄລ່ກິນ -
ເຫດນີ້ກຍາງຊື່ນມາຖາມຄວາມໂຈດ ຕົກແກ້ງູທັ້ງ ດ້ວຍເຫຕຸວ່າຈານເຈົ້າ
ຜູ້ສລາດເປັນນັກປາດ ເຄີຍແກ້ເຫສນາບັນຫາ ກໍວິຈິດຈະນາ ດ້ວຍປະຕິ
ໂລມໃນ ໄຂແຕ່ບົດລົງໄດ້ ໘໔ ບັດນີ້ ດັ່ງນີ້ກ່ອນແລ້ວ ຊຸມັນ ຄືເຈົ້າຊຸມ
ຜູ້ໃຫຍ່ ເປັນພໍ່ເປັນແມ່ໄພ່ເມືອງນັ້ນ - ໑ - ໄລ່ກິນນັ້ນ ຄືການຈົມ-
ບຽດບຽນ ໄພ່ຟ້າຂ້າໄທທັງຫຼາຍນັ້ນ-໒- ກົບຂຽດນັ້ນ ຄືໄດ້ໄພ່ນ້ອຍ-
ຂ້ອຍກົບຂຽດກັບເມືອງ -໓- ຮ້ອງ ຄືໄພ່ຈົ່ມກອງຕິຕຽນເຈົ້າຊຸມນັ້ນ -
໔- ຝົນນັ້ນ ຄືການບ້ານການເມືອງທັງ ໕ ຕົກລົ່ນລົ້ນຄືເຈົ້າຊຸມ ແຕ່ງ
ວຽກບ້ານການເມືອງ ຜົນປະມານແກ່ໄພ່ຟ້າຂ້າໄທນັ້ນ-໕- ຝົນນັ້ນຄືໜ້າ
ໃຈ ແຫ່ງເຈົ້າຊຸມທັງຫຼາຍຜູ້ງເປັນໃຫຍ່ນັ້ນ -໖-ຊຸມນັ້ນຄືກັບເສບຜູ້ນັ້ນ
ນັກຍາບ ໄປພາລາຫາທີ່ນທາທັນບໍ່ໄດ້ - ໗ - ໄຟນັ້ນຄືສາສນາແກ້ວ-
ທັງ ໓ ປະການ-໙- ບໍ່ລຸກນັ້ນຄືຄົນທັງຫຼາຍ ບໍ່ປະຕິບັດຟັງຈຳສິນໃຫ້ທານ
ກະທຳບຸນ ເລີກຍົກຍໍສາສນາພຣະພຸທເຈົ້າ ໃຫ້ຮຸ່ງເຮືອງນັ້ນ-໑໐-ເຂົ້າ
ນັ້ນ ຄືອະນິດຕະທັມ ຄຳສອນພຣະພຸທເຈົ້ານັ້ນ -໑໑- ບໍ່ສຸກນັ້ນຄືຄົນທັງ
ຫຼາຍ ປະຕິບັດຟັງທັມຈຳສິນພາວະນາ ໃຫ້ໄດ້ເຖິງທັມອັນຍິ່ງໜັກນັ້ນ...

໑໘- ທອງນັ້ນ ຄືສະມຸໄທຍະຕັນຫາອັນມາກພັກ ອັນເກີດໃນສັນຕະຣະ ແຫ່ງສັຕຕະໂລກທັງຫຼາຍນັ້ນ -໑໓- ແສບນັ້ນ ຄືປະທັມມິຕັນຫາ ໂທສະນາກ ນີມານະອັນກາລະແຂງໃນສະນັດຣະ ແຫ່ງສັດຕະໂລກທັງ-ຫາຍນັ້ນ -໑໔ - ເຈົ້າງົວນັ້ນ ຄືຜີຟ້າຜີແຖນຜີມົດຜີພົມ -໑໕- ບໍແກ້ວ ໂບນັ້ນ ວິວາດຖອຍຖຽງກັນ ເປັນສະຖັນຕະຣະ ກັບເກີດມີດວງມົນກິດີ ຊູມສີທັມມະຣາຊາຕິນຈັກອາດສ້າງບ້ານແປງເມືອງ ໃຫ້ຮູ່ງເຮືອງທຸກແຫ່ງ ແຕ່ໃຫ້ຊອບຄອງທັມມະ ສັມມະນະກັບບວດ ຈິງພຣະນວດຊອບສິນັຍກໍຍັງ ຈັກເກີດມາ ເລີກຍິກຍໍຍັງພຸທສາສນາ ໃຫ້ຮູ່ງເຮືອງທັງບ້ານທັງເມືອງ ໃຫ້ສຸກຂະສເນີດຈົງເກົາ ເລົາກໍຍັງຈັກມີດຫຼີດາຍ ເຫດດັ່ງນັ້ນອາຈານ-ເຈົ້າເລົ່າແກ້ ປີສນານິກຍາງນີ້ເປັນບັນຫາ ແຕ່ເຄົ້າເຖິງປາຍດ້ອຍໃນ ໄຂປະເສດ ອັນວ່າບໍ່ກອກນັ້ນ ເສດລວດວ່ານິກຍາງກອງປານນີ້ ລືນກຍາງນັ້ນ ຄືຊາວເຈົ້ານັກບວດທັງຫຼາຍ -໑- ກອກນັ້ນ ຄືສູດຣຽນທັມມະເທສນາ ແກ່ບັນທາຊອບສິກຂາບົດ ພຣະພຸທເຈົ້າເອງ -໒- ປານນັ້ນຄືທ້າວພຍາເສນາອາມາດທັງຫຼາຍນັ້ນ -໓- ບອນບອກນັ້ນ ຄືວ່າຍົມດີມີສັດທາ ສັມມາຖິດຖິ ເລີກຍິກຍໍຍັງສາສນາ ພຣະພຸທເຈົ້າໃຫ້ຮູ່ງເຮືອງ - ໔ - ຫຼ້ານັ້ນ ຄືການລ້ຽງອິນທີຊີດແຫ່ງຕົນນັ້ນ - ໕ - ໂບ້ຣກນັ້ນ ຄືສັມມາຊີວະ ອັນລ້ຽງຕົນດ້ວຍອັນຊອບທັມມະນັ້ນ -໖- ງົວນັ້ນ ຄືຄົນທັງຫຼາຍ ອັນເປັນພີ່ນ້ອງເຮືອນນັ້ນ - ໗ - ກັດນັ້ນ ຄືວ່າສັມມາທິດຖີ ມະສະຫາທັມມະປຸ້ນແຜວ ຖາງກິນທາງ ເມືອງຟ້າ ແລະນິລະພານນັ້ນ-

-໘- ເຈົ້າງົວນັ້ນ ຄືວ່າຜີຟ້າພີແຖນ ຜີບ້ານຜີເຮືອນ ຄົນທັງຫຼາຍນັ້ນແລ
-໙- ປ່ອຍນັ້ນ ຄືໜັກບໍ່ໂຫ້ງວກິນຄວາຍພອກ ຜີນັ້ນເປັນບາບຊຶ່ງຄົນທັງຫຼາຍ
-໑໐- ທອງນັ້ນ ຄືສະມຸທາຍະຕັນຫາ ອັນເກີດໃນສັນຕະແຫ່ງຄົນທັງຫຼາຍ
-໑໑- ບໍ່ແສບນັ້ນ ຄືປາປະທຳ ມິຕິນວ່າ ເທົາສະໂມທານະນາ ແຫ່ງສັດ
ທັງຫຼາຍ ໃຫ້ນ້ອຍໃຫ້ບາງນັ້ນ - ໑໒ -ເຂົ້ານັ້ນ ຄືອະນິດຕະທັມມະ ຄຳ
ສອນ ແຫ່ງພຣະພຸທເຈົ້າ - ໑໓ - ສຸກນັ້ນ ຄືວ່າຄົນທັງຫຼາຍປະຕິດາມ-
ທຳຄຳສອນພຣະພຸທເຈົ້າ ໃຫ້ໄດ້ເຖິງທັມອັນຍິ່ງນັ້ນ-໑໔- ໄຟນັ້ນ ຄືສາ
ສນາແກ້ວ ໓ ປະການນັ້ນ -໑໕ - ລູກນັ້ນ ຄືຄົນທັງຫຼາຍມີສັດທາກະທຳ
ບຸນໃຫ້ທານ ຮັກສາສິນພາວະນາ ເລີກຍົກບໍ່ສາສນາ ໃຫ້ຮຸ່ງເຮືອງນັ້ນ -
- ໑໖ - ຟືນນັ້ນ ຄືໃຈແຫ່ງສັດຕະໂລກທັງຫຼາຍ - ໑໗ - ໄຂ່ນັ້ນຄື -
ເສບສັບປຸຣິສາເຈົ້າທັງຫຼາຍ ຜູ້ມີປັນຍານັ້ນ -໑໘ -ຜົມນັ້ນ ຄືວຽກບ້ານ
ການເມືອງ ທັງມວນນັ້ນ -໑໙- ຕົກຊອກຣະດູນັ້ນ ຄືທ້າວພຍາເຈົ້າຂຸນ-
ທັງຫຼາຍ ແຕ່ງເລີງເຂີງຊອບ ແກ່ໄພ່ຟ້າຂ້າໄທ້ນັ້ນ--໒໐- ກົບຂຽດນັ້ນຄື
ໄດ້ໄພ່ຟ້າ ຂ້າໄທທັງຫຼາຍ - ໒໑ -ບໍ່ຮອງນັ້ນ ຄືວ່າບໍ່ຈົນບໍ່ຟອງ ຕິຕຽນ
ເຈົ້າຂຸນທັງຫຼາຍນັ້ນ - ໒໒ - ງູນັ້ນ ຄືທ້າວພຍາເສນາອາມາດຜູ້ງເປັນ
ໃຫ່ຍນັ້ນ - ໒໓ - ບໍ່ໄລ່ກິນກົບຂຽດນັ້ນ ຄືຮູ້ອຸດຸກນາ ບໍ່ບຽດບຽນໄພ່ຟ້າ
ຂ້າທັງຫຼາຍ - ໒໔ - ໃນຍະເລົາໂສດ ອາຈານເຈົ້າທັງຫຼາຍ ຜູ້ງສລາດ
ຈັກແກ່ສາຍຕາປັດຕາ ອັນນີ້ ດ້ວຍສະມຸທາ ບາຍກັບກັນ ວ່າດັ່ງນີ້ ອັນວ່າ
ນິກຍາງເຣີຍ ນັງສັງບໍ່ກອກນັ້ນ ຄືສັນນະນາພານເຈົ້າ ທັງຫຼາຍ....

ບໍ່ສູດບໍ່ຮຽນບໍ່ຂຽນທັມມະ ອັນຈັກເລີຍຍົກຍໍສາສນາ ພຣະພຸທເຈົ້າ ທັງ
ຫຼາຍ ຜູ້ສລາດຈັກແກ້ໃຫ້ຮູ້ເຣື່ອງນັ້ນ - ໑ - ອັນວ່າ ປາບໍ່ບອນບໍ່
ບອກນັ້ນ ຄືວ່າ ທ້າວພຍາເສນາອາມາດທັງຫຼາຍ ບໍ່ມີສັດທາເຫຼື້ອມໃສ
ໃນພຣະພຸທເຈົ້າ - ໒ - ຮົກນັ້ນ ຄືທ້າວພຍາຂຸນທັງຫຼາຍ ຖືມິດສາ
ທິດຖິຜີຍ້າວຜີເຮືອນ ເຊົາມືວຽກການບ້ານການເມືອງມາກນັກ -໓- ອັນ
ວ່າງົວບໍ່ກົດຫຍ້າ ຄືວ່າຜີຍ້າວຜີເຮືອນທັງຫຼາຍຄືວ່າມິດສາທິດຖິບໍ່ແຜ້ວ-
ທີມທາງເມືອງຟ້າ -໔- ອັນວ່າເຈົ້າງົວບໍ່ປ່ອຍນັ້ນ ຄືທ້າວພຍາບໍ່ສົ່ງຣາຊ
ອາດຍາອາມັດ ໃຫ້ຄົນທັງຫຼາຍເສບມິດສາທິດຖິຜີຍ້າວຜີເຮືອນທັງຫຼາຍ
ເຂົາ -໕- ອັນວ່າແສບທ່ອງນັ້ນ ຄືວ່າກິຍຸກອຸກຂະລຸກຂໍາເຂືອກເກີດເປັນ
ເສືອໃນບ້ານເມືອງມາກ ກັບທັງໄພ່ໄພແລະຜີສູນຄົນທັງຫຼາຍ -໖- ເຂົ້າບໍ່
ສຸກນັ້ນ ຄືກັມມະວິບາກເຫ່ງຄົນທັງຫຼາຍ ໄປແກບໍ່ບ່ອນປາຖນາອັນໃດກໍ
ບໍ່ໄດ້ດັ່ງໃຈນັກນັ້ນ -໗- ອັນວ່າໄຟບໍ່ລຸກນັ້ນ ຄືວ່າເຈົ້າສັມມະນະພາມ
ທັງຫຼາຍບໍ່ກະທໍາ ເລີກຍົກຍໍສາສນາ ພຣະພຸທເຈົ້າ ໃຫ້ຮູ້ເຣື່ອງນັ້ນ-
-໘- ຟື້ນຊຸ່ມນັ້ນ ຄືຄົນທັງຫຼາຍ ຜູ້ໃຫ່ຍຜູ້ນ້ອຍ ໃຈອັນເປັນບາບມາກນັກ
ນັກເຮັດຄວາມເກົ່າກັນມາກພັກ ຜູ້ເກົ້າກ່ອນກັນ ຂ້າຟັນກັນດີຫຼີ -໙- ອັນ
ວ່າຜົນຕົກລົ່ນລົ້ນ ຄືຊາວເຈົ້າຊີຊຽງຜູ້ຮ້າຍ ບໍ່ສັ່ງວອນຮັກສາສິກຂາ-
ບົດບໍ່ດີ ອັນພຣະພຸທເຈົ້າຕັ້ງໄວ້ນັ້ນ ລວດໃຫ້ສາສນາພົ້ນພ້ອງ ບໍ່ຈໍາ-
ເຣີນ ນໍາຄໍາສອນເຫ່ງພຣະພຸທເຈົ້ານັ້ນ - ໑໐ - ອັນວ່າ ກົບຂຽດຣ້ອງ
ນັ້ນ ຄືໄພ່ຟ້າຂ້າໄທທັງຫຼາຍ ຕາຍຢາກເຂົ້າ ຄາງໃຫ້ທຸກໄຮ້ພ້ອງໃຈ-

ນັ້ນ - ໑໑ - ອັນວ່າງູໄລ່ກິນກິບກິນຂຽດນັ້ນ ຄືວ່າ ທ້າວພຍາ ແລະ
ເສນາອາມາດທັງຫລາຍ ໂລພະຕັນຫາມາກໜັກ ບຽດບຽນໄພ່ຟ້າຂ້າໄທ
ດ້ວຍສ່ວຍໄຣ່ເຂົ້າ ງວດງາອາກອນພົນປະມານບໍ່ອິດູນາ ໃນກາລະ-
ເມື່ອຍາມຖ້ອຍຖ້ຽວພູ້ນ - ໑໔ - ຊາຕາບັນທາກັນເຍື່ອງນີ້ ພຍາຈັນ
ທະພານິດ ໃຫ້ແຕ່ງແປງພົງສີນິທານ ສຳແດງໄວ້ກັບພຣະທາດເຈົ້າກັບ
ເຂົ້າຂອງກອງສົມບັດ ອັນປະໄວ້ໃນພູຊອງນ້ອຍ ພູຊວງຫລວງນັ້ນ ເມື່ອ
ໄດ້ກິຍຸກເກີດມີແລ້ວ ໄປຫາຍເທວະດາທັງຫລາຍ ຍັງບັງໄວ້ກ່ອນ ບໍ່ໃຫ້
ປາກົດ ເມື່ອໃດທ້າວຜູ້ມີບຸນຄຸນ ພຍາທັມມະຣາຊເຈົ້າ ມາສເວີຍຣາດ
ອາດຍົກຍໍສາສນາ ພຣະພຸທເຈົ້າໃຫ້ຮຸ່ງເຮືອງ ທັງບ້ານເມືອງກໍໃຫ້ ມີ
ຄວາມສຸກຍານໃດ ດັ່ງນັ້ນ ເທວະດາທັງຫລາຍກໍແບ່ງມີກຍາງໄວ້ສຳ-
ແດງ ເປັນສຳຄັນສາຍາຮູບນິກຍາງນັ້ນ ໃຫ້ປາກົດແຈ້ງແກ່ຄົນທັງຫລາຍ
ກໍຈື່ງໃຫ້ເອົາພຣະສາທິຣາດເຈົ້າ ກັບທັງເຂົ້າຂອງສົມບັດທັງມວນນັ້ນ-
ເອົາອອກມານັ້ນ. ດູລາສັບປູຣິສາທັງຫລາຍ ສ່ວນວ່າພຍາຈັນທະພານິດ
ສເວີຍຣາຊສົມບັດ ດ້ວຍອັນປະກອບຊອບທັດສະທັມ ສ້ຽງເຈັ້ຽງຣະການ
ນານໄປ ຕາບຕໍ່ເທົ້າແດນອາຍຸສັງຂານແຫ່ງຕົນແລ້ວ ກໍຈຸດຕິຈາກພາກ
ຕາມຍະຖາກັມແຫ່ງຕານ ເມື່ອນັ້ນ ປຸດຕະເປັນພຍາປາຣົບຣາ ສືບວົງ
ສາ ພຍາຈັນທະພານິດ ໄປຕາບຕໍ່ເທົ້າ ແຫ່ງຊີວິດແຫ່ງເຂົາ ເປັນ-
ເຫີງນານແລ້ວ ລວດເສົ້າສູນ ເສັ້ງອົງສາພຍາໃນຊຽງດົງ ຊຽງທອງ
ທັ້ນ ເມື່ອນັ້ນ ລາວລ້ານຊ້າງທັງມວນ ລວດເກີດເປັນບົ້ນ ເປັນທ່ອນຢູ່

ຢູ່ຕາມໝູ່ຕ່າງເຂດ ເອົາເພດເປັນທ້າວພຍາ ລວດບໍ່ໄປສູ່ໄປຫາຜູ້ໃດ
ເລົ່າ ແລະບູຮານມະຊາດເຊື້ອ ຈັນທະພານິດ ບູນຊູສົມຣິດທິສັກ ໃຫ້
ເປັນພຍາຍົກຍິ່ງ ທົງຣິດທິເຣືອງຮູ່ງ ໄວແອລືທິດສ່າໄຕເຫຼ້ງຫຼ້າໂລກ
ເຣືອງ ອັສຈັນນິທານເຈົ້າ ຈັນທະພານິດຊາ ກໍ່ສະເດັດບໍ່ຣະບອນ -
ຄວນເທົ່ານີ້ ກ່ອນແລ....................

ຈັດພິມຄັ້ງທີ່ ໒ ໂດຍ :

ສະມາຄົມ ຫຼວງພຣະບາງ
LUANG-PRABANG
Association

ທີ່ ນະຄອນປາຣີ (ປະເທດຝຣັ່ງເສດ) ເດືອນ ພຶສຈິກາ ປີ ຄ.ສ. ໒໐໐໐